ບໍລິສັດ ຊີມັງລາວ ມະຫາຊົນ

ເອກະສານລາຍງານການເງິນ

ສຳລັບປີທີ່ສິ້ນສຸດ ວັນທີ 31 ທັນວາ 2021

ບໍລິສັດ ຊິມັງລາວ ມະຫາຊົນ

ສາລະບານ

	ໜ້າ
ຂໍ້ມູນທົ່ວໄປ	1 - 2
ບົດລາຍງານຂອງຄະນະບໍລິຫານ	3
ບົດລາຍງານຂອງນັກກວດສອບອິດສະຫຼະ	4 - 7
ໃບລາຍງານຖານະການເງິນ	8 - 9
ໃບລາຍງານຜົນການດຳເນີນງານ	10
ໃບລາຍງານສ່ວນປ່ຽນແປງທຶນເຈົ້າຂອງ	11
ໃບລາຍງານກະແສເງິນສົດ	12
ບົດອະທິບາຍຊ້ອນທ້າຍເອກະສານລາຍງານການເງິນ	13 - 32

ບໍລິສັດ ຊີມັງລາວ ມະຫາຊົນ

ຂໍ້ມູນທົ່ວໄປ

ບໍລິສັດ

ບໍລິສັດ ຊີມັງລາວ ມະຫາຊົນ ("ບໍລິສັດ") ກ່ອນໜ້ານີ້ແມ່ນ ບໍລິສັດ ຊີມັງລາວ ຈຳກັດ ຖືກສ້າງຕັ້ງຂຶ້ນຕາມກົດລະບຽບພາຍໃນຂອງບໍລິສັດທີ່ເຊັນຮັບຮອງ ທີ່ນະຄອນຫຼວງວຽງຈັນ, ສປປ ລາວ ໃນວັນທີ 15 ທັນວາ 1998 ລະຫວ່າງ ລັດວິສາຫະກິດພັດທະນາກະສິກຳ-ອຸດສາຫະກຳ ແລະ ບໍລິການຂາອອກ-ຂາເຂົ້າ ("ຝ່າຍ ກ") ກັບ ບໍລິສັດຮ່ວມມືສາກົນດ້ານເສດຖະກິດ-ເຕັກນິກຢຸນນານ ສປ ຈີນ ("ຝ່າຍ ຂ").

ວັນທີ 6 ທັນວາ 1999, ບໍລິສັດໄດ້ຮັບໃບທະບຽນຄັ້ງທຳອິດເລກທີ 1154/ຈທກ ອອກໂດຍ ກະຊວງອຸດສະຫະກຳ ແລະ ການຄ້າ, ເຊິ່ງ ບໍລິສັດໄດ້ຮັບອະນຸຍາດໃຫ້ດຳເນີນທຸລະກິດກ່ຽວກັບຊີມັງ ແລະ ຜະລິດຕະພັນຕ່າງໆທີ່ກ່ຽວຂ້ອງກັບຊີມັງເພື່ອການຈຳໜ່າຍພາຍໃນ ແລະ ສົ່ງອອກ.

ບໍລິສັດໄດ້ມີການປັບປຸງໃບທະບຽນວິສາຫະກິດດັ່ງລຸ່ມນີ້:

ໃບທະບຽນວິສາຫະກິດ	*ວັນທີ*
0078/ຈທກ	5 ເມສາ 2006
1719/ຈທກ	26 ກຸມພາ 2009
0244/ຈທກ	20 ກຸມພາ 2012
1436/ຈທກ	15 ພະຈິກ 2012
791/ຈທກ	13 ພະຈິກ 2015
1016/ຈທກ	5 ທັນວາ 2016
0247/ຈທກ	24 ມີນາ 2017
0688/ຈທກ	2 ສິງຫາ 2017
0160/ຈທກ	20 ກຸມພາ 2018

ກິດຈະກຳຫຼັກຂອງບໍລິສັດ ອີງຕາມໃບດຳເນີນທຸລະກິດແມ່ນມີດັ່ງນີ້:

- ຜະລິດຊີມັງ ແລະ ຜະລິດຕະພັນອື່ນໆທີ່ກ່ຽວຂ້ອງກັບຊີມັງ;
- ຂາຍສົ່ງ ແລະ ຂາຍຍ່ອຍຊີມັງ ແລະ ຜະລິດຕະພັນອື່ນໆທີ່ກ່ຽວຂ້ອງກັບຊີມັງສຳລັບການຊົມໃຊ້ພາຍໃນ ແລະ ສົ່ງອອກ.

ສຳນັກງານໃຫຍ່ທີ່ໄດ້ລົງທະບຽນຂອງບໍລິສັດຕັ້ງຢູ່ ບ້ານໂພນພະເນົາ, ເມືອງໄຊເສດຖາ, ນະຄອນຫຼວງວຽງຈັນ, ສປປ ລາວ. ບໍລິສັດຍັງມີ ໂຮງງານຊີມັງວັງວຽງ ຫຼັງ 2 ຢູ່ເມືອງວັງວຽງ, ແຂວງ ວຽງຈັນ, ສປປ ລາວ.

ບໍລິສັດ ຊີມັງລາວ ມະຫາຊົນ

ຂໍ້ມູນທົ່ວໄປ (ຕໍ່)

ສະພາບໍລິຫານ

ສະມາຊິກສະພາບໍລິຫານ ພາຍໃນປີ ແລະ ນະວັນທີຂອງບົດລາຍງານສະບັບນີ້ລວມມີ:

ຊື່	*ຕຳແໜ່ງ*
ທ່ານ ຢາງ ຊຸນຢິນ	ປະທານ
ທ່ານ ວັນທອງ ສົດທິກຸນ	ຮອງປະທານ
ທ່ານ ຈ່າງ ລີ້	ສະມາຊິກ
ທ່ານ ອຸ ຢາງ ຊຸ ຢິງ	ສະມາຊິກ
ທ່ານ ເຈຍ ເຢົາຊີ	ສະມາຊິກ
ທ່ານ ຄຳບົນ ໄຊເລົ່າວົງ	ສະມາຊິກ
ທ່ານ ວິຈິດ ສຸວັນນະລາດ	ສະມາຊິກ
ທ່ານ ສ່ຽວ ເຈຍ	ສະມາຊິກອິດສະລະ
ທ່ານ ຫຼີ ຊຸນ ໂປ	ສະມາຊິກອິດສະລະ
ທ່ານ ວົງວິຈິດ ແກ້ວວົງກົດ	ສະມາຊິກອິດສະລະ

ຄະນະອຳນວຍການ

ສະມາຊິກຄະນະອຳນວຍການຂອງບໍລິສັດ ພາຍໃນປີ ແລະ ນະວັນທີຂອງບົດລາຍງານສະບັບນີ້ລວມມີ:

ຊື່	*ຕຳແໜ່ງ*
ທ່ານ ຈ່າງ ລີ້	ຜູ້ອຳນວຍການໃຫຍ່
ທ່ານ ວິຈິດ ສຸວັນນະລາດ	ຮອງຜູ້ອຳນວຍການໃຫຍ່
ທ່ານ ເຈຍ ເຢົາຊີ	ຜູ້ອຳນວຍການ
ທ່ານ ຄຳບົນ ໄຊເລົ່າວົງ	ຜູ້ອຳນວຍການ
ທ່ານ ສ່ຽວ ເຈຍ	ຜູ້ອຳນວຍການ
ທ່ານ ຫຼີ ຊຸນ ໂປ	ຜູ້ອຳນວຍການ
ທ່ານ ວົງວິຈິດ ແກ້ວວົງກົດ	ຜູ້ອຳນວຍການ

ຄະນະກຳມະການກວດສອບ

ສະມາຊິກຄະນະກຳມະການກວດສອບຂອງບໍລິສັດ ພາຍໃນປີ ແລະ ນະວັນທີຂອງບົດລາຍງານສະບັບນີ້ລວມມີ:

ຊື່	*ຕຳແໜ່ງ*
ທ່ານ ຫຼີ ຊຸນ ໂປ	ສະມາຊິກ
ທ່ານ ວົງວິຈິດ ແກ້ວວົງກົດ	ສະມາຊິກ

ຜູ້ຕາງໜ້າທາງດ້ານກົດໝາຍ

ຕົວແທນທາງດ້ານກົດໝາຍຂອງບໍລິສັດ ພາຍໃນປີ ແລະ ນະວັນທີບົດລາຍງານສະບັບນີ້ແມ່ນ ທ່ານ ຈ່າງ ລີ້, ຜູ້ອຳນວຍການໃຫຍ່.

ນັກກວດສອບບັນຊີ

ນັກກວດສອບບັນຊີຂອງບໍລິສັດແມ່ນ ບໍລິສັດ ເອີນແອນຢັງ ລາວ ຈຳກັດ.

ບໍລິສັດ ຊີມັງລາວ ມະຫາຊົນ

ບົດລາຍງານຂອງຄະນະອຳນວຍການ

ຄະນະອຳນວຍການ ບໍລິສັດ ຊີມັງລາວ ມະຫາຊົນ ("ບໍລິສັດ") ມີຄວາມຍິນດີນຳສະເໜີບົດລາຍງານຂອງຕົນເອງ ແລະ ເອກະສານລາຍງານການເງິນຂອງບໍລິສັດ ສຳລັບປີທີ່ສິ້ນສຸດ ວັນທີ 31 ທັນວາ 2021.

ຄວາມຮັບຜິດຊອບຂອງຄະນະອຳນວຍການຕໍ່ເອກະສານລາຍງານການເງິນ

ຄະນະອຳນວຍການມີຄວາມຮັບຜິດຊອບໃນການກະກຽມເອກະສານລາຍງານການເງິນ ເຊິ່ງຖືກກະກຽມອີງຕາມນະ�โยบายການບັນຊີຕາມທີ່ໄດ້ລະບຸໃນບົດອະທິບາຍ ເລກທີ 3 ຂອງເອກະສານລາຍງານການເງິນ. ນະ�โยบายການບັນຊີເຫຼົ່ານີ້ແມ່ນບໍ່ໄດ້ມີຈຸດປະສົງນຳສະເໜີຖານະການເງິນ, ຜົນຂອງການດຳເນີນງານ ແລະ ກະແສເງິນສົດຂອງບໍລິສັດໂດຍສອດຄ່ອງຕາມຫຼັກການບັນຊີສາກົນທີ່ຖືກຍອມຮັບໂດຍທົ່ວໄປ. ໃນການກະກຽມເອກະລາຍງານການເງິນ, ຄະນະອຳນວຍການຕ້ອງປະຕິບັດດັ່ງນີ້:

- ເລືອກເຟັ້ນເອົານະโยบายການບັນຊີທີ່ເໝາະສົມ ແລະ ຈັດຕັ້ງປະຕິບັດຢ່າງສະໝ່ຳສະເໝີ;
- ພິຈາລະນາ ແລະ ຄາດຄະເນຢ່າງສົມເຫດສົມຜົນ ແລະ ລະອຽດຮອບຄອບ;
- ຖະແຫຼງການว่า ບັນດາມາດຕະຖານການບັນຊີທີ່ກ່ຽວຂ້ອງໄດ້ຖືກປະຕິບັດຕາມມາດຕະຖານ, ສິ່ງທີ່ໄດ້ປະຕິບັດແຕກຕ່າງຈາກມາດຕະຖານຈະຕ້ອງຖືກເປີດເຜີຍ ແລະ ອະທິບາຍຢູ່ໃນເອກະສານລາຍງານການເງິນ; ແລະ
- ກະກຽມເອກະສານລາຍງານການເງິນບົນພື້ນຖານຄວາມສືບເນື່ອງໃນການດຳເນີນທຸລະກິດ, ຍົກເວັ້ນໃນກໍລະນີທີ່ບໍລິສັດຫາກຕັ້ງຂໍ້ສົມມຸດຖານ ຫຼື ຄາດຄະເນວ່າບໍລິສັດ ຈະບໍ່ສາມາດດຳເນີນທຸລະກິດຕໍ່ໄປໄດ້.

ຄະນະອຳນວຍການມີໜ້າທີ່ຮັບປະກັນว่า ບັນດາຂໍ້ມູນການບັນທຶກທາງບັນຊີໄດ້ຖືກເປີດເຜີຍຖານະທາງການເງິນຂອງບໍລິສັດຢ່າງສົມເຫດສົມຜົນຕະຫລອດເວລາ ແລະ ຮັບປະກັນว่า ເອກະສານລາຍງານການເງິນແມ່ນສອດຄ່ອງກັບລະບົບການບັນຊີທີ່ໄດ້ນຳໃຊ້. ຄະນະອຳນວຍການຂອງບໍລິສັດຍັງຮັບຜິດຊອບຕໍ່ການຮັກສາຊັບສົມບັດຂອງບໍລິສັດ ແລະ ຮັບປະກັນว่าບໍລິສັດມີ ຂັ້ນຕອນທີ່ສົມເຫດສົມຜົນໃນການປ້ອງກັນ ແລະ ຄົ້ນຫາການສໍ້ໂກງ ແລະ ສິ່ງທີ່ຜິດປົກກະຕິອື່ນໆ.

ຄະນະອຳນວຍການຢັ້ງຢືນว่า ໄດ້ປະຕິບັດຕາມທຸກຂໍ້ກຳນົດຂ້າງເທິງໃນການກະກຽມເອກະສານລາຍງານການເງິນສະບັບນີ້.

ຖະແຫຼງການຂອງຄະນະອຳນວຍການ

ຄະນະອຳນວຍການ ຂໍຖະແຫລງว่าເອກະສານລາຍງານການເງິນແມ່ນໄດ້ກະກຽມຖືກຕ້ອງຕາມຄວາມເປັນຈິງ ສອດຄ່ອງກັບນະ�โยบายບັນຊີທີ່ລະບຸໄວ້ໃນບົດອະທິບາຍ ເລກທີ 3 ຂອງເອກະສານລາຍງານການເງິນ.

ໃນນາມຂອງຄະນະອຳນວຍການ:

ບໍລິສັດ ຊີມັງລາວ ມະຫາຊົນ Lao Cement Public Company

ທ່ານ ຈ່າງ ສີ
ຜູ້ອຳນວຍການໃຫຍ່

ນະຄອນຫຼວງວຽງຈັນ, ສປປ ລາວ

14 ເມສາ 2022

Ernst & Young Lao Co., Ltd
6th floor, Kolao Tower I, 23 Singha Road
Nongbone Village, Saysettha District
Vientiane Capital, Lao P.D.R.

Tel: +856 21 455 077
Fax: +856 21 455 078
ey.com

Building a better working world

ເລກທີອ້າງອີງ: 61228095/E-22734543

ບົດລາຍງານຂອງນັກກວດສອບອິດສະຫຼະ

ຮຽນ : ຜູ້ຖືຮຸ້ນຂອງ ບໍລິສັດ ຊີມັງລາວ ມະຫາຊົນ ທີ່ນັບຖື

ຄຳເຫັນ

ພວກຂ້າພະເຈົ້າໄດ້ດຳເນີນການກວດສອບເອກະສານລາຍງານການເງິນຂອງ ບໍລິສັດ ຊີມັງລາວ ມະຫາຊົນ ("ບໍລິສັດ"), ເຊິ່ງປະກອບດ້ວຍ ໃບລາຍງານຖານະການເງິນ ນະວັນທີ 31 ທັນວາ 2021, ແລະ ໃບລາຍງານຜົນການດຳເນີນງານ, ໃບລາຍງານສ່ວນປ່ຽນແປງທຶນເຈົ້າຂອງ ແລະ ໃບລາຍງານກະແສເງິນສົດ ສຳລັບປີທີ່ສິ້ນສຸດວັນທີດັ່ງກ່າວ ແລະ ບົດອະທິບາຍເອກະສານລາຍງານການເງິນ ລວມທັງບົດສະຫຼຸບນະໂຍບາຍການບັນຊີທີ່ສຳຄັນ.

ໃນຄຳເຫັນຂອງພວກຂ້າພະເຈົ້າ, ເອກະສານລາຍງານການເງິນຂອງບໍລິສັດໄດ້ຖືກກະກຽມໂດຍຖືກຕ້ອງຕາມຄວາມເປັນຈິງ, ສອດຄ່ອງກັບນະໂຍບາຍການບັນຊີ ທີ່ລະບຸໄວ້ໃນບົດອະທິບາຍເລກທີ 3 ຂອງເອກະສານລາຍງານການເງິນ.

ພື້ນຖານໃນການອອກຄຳເຫັນ

ພວກຂ້າພະເຈົ້າໄດ້ດຳເນີນການກວດສອບ ໂດຍອີງຕາມມາດຕະຖານ ว่าด้วยการกวดสอบสากล (ISAs). ບັນດາຄວາມຮັບຜິດຊອບຂອງພວກຂ້າພະເຈົ້າ ພາຍໃຕ້ບັນດາມາດຕະຖານເຫຼົ່ານັ້ນໄດ້ຖືກອະທິບາຍເພີ່ມຕື່ມໃນວັກ *ຄວາມຮັບຜິດຊອບຂອງນັກກວດສອບໃນການກວດສອບເອກະສານລາຍງານການເງິນ* ຂອງບົດລາຍງານຂອງພວກຂ້າພະເຈົ້າ. ພວກຂ້າພະເຈົ້າ ແມ່ນມີຄວາມເປັນເອກະລາດຈາກບໍລິສັດ ໂດຍສອດຄ່ອງກັບກົດຈັນຍາບັນທາງບັນຊີສຳລັບນັກວິຊາຊີບບັນຊີຂອງສະພາມາດຕະຖານສາກົນດ້ານຈັນຍາບັນ (IESBA Code) ແລະ ບັນດາຂໍ້ກຳນົດທາງດ້ານຈັນຍາບັນທີ່ກ່ຽວຂ້ອງກັບການກວດສອບເອກະສານລາຍງານການເງິນຂອງພວກຂ້າພະເຈົ້າໃນ ສປປ ລາວ ແລະ ພວກຂ້າພະເຈົ້າຍັງໄດ້ປະຕິບັດບັນດາຄວາມຮັບຜິດຊອບທາງດ້ານຈັນຍາບັນອື່ນໆ ໂດຍສອດຄ່ອງກັບກົດຈັນຍາບັນທາງບັນຊີສຳລັບນັກວິຊາຊີບບັນຊີຂອງສະພາມາດຕະຖານສາກົນດ້ານຈັນຍາບັນ. ພວກຂ້າພະເຈົ້າ ເຊື່ອว่าหลักฐานการกวดสอบที่ພວກຂ້າພະເຈົ້າໄດ້ຮັບແມ່ນພຽງພໍ ແລະ ເໝາະສົມເພື່ອເປັນພື້ນຖານໃຫ້ແກ່ການອອກຄຳເຫັນຂອງພວກຂ້າພະເຈົ້າ.

ບັນຫາທີ່ຄວນເອົາໃຈໃສ່

ພວກຂ້າພະເຈົ້າສະເໜີໃຫ້ເອົາໃຈໃສ່:

- ພວກຂ້າພະເຈົ້າສະເໜີໃຫ້ເອົາໃຈໃສ່ໃນບົດອະທິບາຍເລກທີ 2 ຂອງເອກະສານລາຍງານການເງິນ ທີ່ໄດ້ລະບຸว่าบริษัทมียอดขาดทุนสุດທີ 21.6 ຕື້ກີບ ສຳລັບປີທີ່ສິ້ນສຸດນະວັນທີ 31 ທັນວາ 2021. ນະວັນທີດັ່ງກ່າວ, ບໍລິສັດ ມີຍອດຂາດທຶນສະສົມ 53.4 ຕື້ກີບ. ເນື່ອງຈາກຜົນກະທົບຂອງມາດຕະການປ້ອງກັນການແຜ່ລະບາດຂອງພະຍາດໂຄວິດ 19 ໂດຍລັດຖະບານແຫ່ງ ສປປ ລາວ ແລະ ບັນຫາຫຍຸ້ງຍາກທາງດ້ານເສດຖະກິດ, ບໍລິສັດໄດ້ຢຸດການຜະລິດທັງໝົດຊົ່ວຄາວຕັ້ງແຕ່ເດືອນ ເມສາ 2020. ໃນວັນທີ 25 ສິງຫາ 2020, ບໍລິສັດໄດ້ອອກແຈ້ງການເລກທີ 202/ບຊລ ກ່ຽວກັບການຢຸດຜະລິດຊົ່ວຄາວຈົນເຖິງການແຈ້ງການຄັ້ງຕໍ່ໄປ. ເງື່ອນໄຂດັ່ງກ່າວນີ້ໄດ້ຊີ້ໃຫ້ເຫັນຄວາມບໍ່ແນ່ນອນທີ່ມີຄວາມສຳຄັນ ເຊິ່ງອາດເກີດການສົງໄສຢ່າງໃຫຍ່ຫຼວງກ່ຽວກັບຄວາມສາມາດໃນການສືບເນື່ອງໃນການດຳເນີນທຸລະກິດຂອງບໍລິສັດ.
- ພວກຂ້າພະເຈົ້າສະເໜີໃຫ້ເອົາໃຈໃສ່ໃນບົດອະທິບາຍເລກທີ 26 ຂອງເອກະສານລາຍງານທາງການເງິນ ທີ່ໄດ້ສະແດງຕົວເລກທີ່ສອດຄ່ອງກັນໃນເອກະສານລາຍງານທາງການເງິນ ທີ່ໄດ້ປັບປຸງໃໝ່ເພື່ອແກ້ໄຂຂໍ້ຜິດພາດປີກ່ອນໜ້ານີ້.
- ພວກຂ້າພະເຈົ້າສະເໜີໃຫ້ເອົາໃຈໃສ່ໃນບົດອະທິບາຍເລກທີ 3 ຂອງເອກະສານລາຍງານການເງິນ ທີ່ໄດ້ລະບຸກ່ຽວກັບນະໂຍບາຍການບັນຊີທີ່ຖືກນຳໃຊ້ໂດຍບໍລິສັດ. ນະໂຍບາຍການບັນຊີເຫຼົ່ານີ້ບໍ່ໄດ້ມີຈຸດປະສົງເພື່ອສະແດງຖານະການເງິນ, ຜົນການດຳເນີນງານ ແລະ ກະແສເງິນສົດຂອງບໍລິສັດໂດຍສອດຄ່ອງກັບຫຼັກການບັນຊີສາກົນທີ່ຖືກຍອມຮັບໂດຍທົ່ວໄປ.

ພວກຂ້າພະເຈົ້າແມ່ນບໍ່ໄດ້ສະແດງຄຳເຫັນແບບມີເງື່ອນໄຂຕໍ່ກັບບັນຫາດັ່ງກ່າວ.

A member firm of Ernst & Young Global Limited

Building a better working world

ບັນຫາທີ່ສຳຄັນໃນການກວດສອບ

ບັນຫາທີ່ສຳຄັນໃນການກວດສອບແມ່ນບັນຫາທີ່ເກີດຈາກການໃຊ້ດຸນພິນິດຢ່າງມີອາຊີບຂອງພວກຂ້າພະເຈົ້າ, ເຊິ່ງມີຄວາມສຳຄັນຫຼາຍທີ່ສຸດ ໃນການກວດສອບເອກະສານລາຍງານການເງິນຂອງປີປະຈຸບັນ.ນອກຈາກ ບັນຫາທີ່ໄດ້ອະທິບາຍໃນຫົວຂໍ້ ຄວາມບໍ່ແນ່ນອນທີ່ໃຫຍ່ຫຼວງ ກ່ຽວຂ້ອງກັບຄວາມສືບເນື່ອງໃນການດຳເນີນທຸລະກິດ ຂ້າງເທິງ, ພວກຂ້າພະເຈົ້າໄດ້ກຳນົດບັນຫາທີ່ໄດ້ອະທິບາຍຂ້າງລຸ່ມນີ້ເປັນບັນຫາທີ່ສຳຄັນໃນການກວດສອບເພື່ອເປີດເຜີຍໃນບົດລາຍງານຂອງພວກຂ້າພະເຈົ້າ. ບັນຫາເຫຼົ່ານີ້ໄດ້ຖືກລະບຸໄວ້ໃນເນື້ອໃນຂອງເອກະສານລາຍງານການເງິນທີ່ກວດສອບໂດຍພວກຂ້າພະເຈົ້າໂດຍລວມ, ແລະ ໃນຮູບແບບຄຳເຫັນຂອງພວກຂ້າພະເຈົ້າ, ແລະ ພວກຂ້າພະເຈົ້າບໍ່ໄດ້ສະໜອງຄຳເຫັນຍ່ອຍກ່ຽວກັບບັນຫາດັ່ງກ່າວ. ສຳລັບບັນຫາລຸ່ມນີ້, ພວກຂ້າພະເຈົ້າໄດ້ໃຫ້ນິຍາມວິທີການຄົ້ນພົບບັນຫາເຊິ່ງຖືກສະໜອງໃນເນື້ອໃນດັ່ງກ່າວ.

ພວກຂ້າພະເຈົ້າໄດ້ປະຕິບັດຕາມຄວາມຮັບຜິດຊອບທີ່ໄດ້ອະທິບາຍໄວ້ໃນວັກຄວາມຮັບຜິດຊອບຂອງນັກກວດສອບໃນການກວດສອບເອກະສານລາຍງານການເງິນໃນບົດລາຍງານຂອງພວກຂ້າພະເຈົ້າ, ລວມທັງບັນຫາທີ່ກ່ຽວຂ້ອງກັບບັນຫາທີ່ເຫຼົ່ານີ້. ດັ່ງນັ້ນ, ການກວດສອບຂອງພວກຂ້າພະເຈົ້າ ລວມທັງການປະຕິບັດບັນດາຂັ້ນຕອນທີ່ອອກແບບມາເພື່ອຕອບສະໜອງຕໍ່ການປະເມີນຄວາມສ່ຽງທີ່ມີສາລະສຳຄັນຂອງເອກະສານລາຍງານການເງິນ. ຜົນຂອງຂັ້ນຕອນການກວດສອບຂອງພວກຂ້າພະເຈົ້າ, ລວມທັງບັນດາຂັ້ນຕອນເພື່ອຊອກຫາບັນຫາດັ່ງລຸ່ມນີ້, ສະໜອງພື້ນຖານໃນການອອກຄຳເຫັນຂອງພວກຂ້າພະເຈົ້າ ຕໍ່ເອກະສານກລາຍງານທາງການເງິນ.

ການເສື່ອມມູນຄ່າຂອງເຄື່ອງໃນສາງ

ນະວັນທີ 31 ທັນວາ 2021, ບໍລິສັດໄດ້ສະແດງມູນຄ່າສຸດທິທັງໝົດຂອງເຄື່ອງໃນສາງໃນມູນຄ່າ 20.8 ຕື້ ກີບ, ລວມທັງເງິນແຮໃນມູນຄ່າ 5.3 ຕື້ ກີບ. ຍອດທັງໝົດຂອງເຄື່ອງໃນສາງແມ່ນເທົ່າກັບ 41% ຂອງຊັບສິນທັງໝົດຂອງບໍລິສັດ. ພວກຂ້າພະເຈົ້າ ໄດ້ພິຈາລະນາການຕີມູນຄ່າຂອງເຄື່ອງສາງເປັນບັນຫາສຳຄັນໃນການກວດສອບ ເນື່ອງຈາກ (ກ) ຜົນກະທົບຂອງການດັດແກ້ເງິນແຮເຄື່ອງໃນສາງແມ່ນມີເນື້ອໃນສຳຄັນຕໍ່ກຳໄລ ຫຼື ຂາດທຶນພາຍໃນປີ, ແລະ (ຂ) ການຄິດໄລ່ການເສື່ອມມູນຄ່າຂອງເຄື່ອງໃນສາງແມ່ນຈະຕ້ອງໃຊ້ດຸນພິນິດທີ່ສຳຄັນໃນການກຳນົດມູນຄ່າເສື່ອມ ແລະ ຄາດຄະເນລາຄາຂາຍ. ດັ່ງນັ້ນ, ຂັ້ນຕອນການກວດສອບຂອງພວກຂ້າພະເຈົ້າຕໍ່ບັນຫາດັ່ງກ່າວ ລວມທັງການທຳຄວາມເຂົ້າໃຈບັນດາຂັ້ນຕອນພາຍໃນ ໃນການຕີມູນຄ່າເຄື່ອງໃນສາງຂອງບໍລິສັດ, ກວດສອບສະພາບຕົວຈິງຂອງເຄື່ອງໃນສາງ ແລະ ກວດມູນຄ່າສຸດທິຕົວຈິງທີ່ກ່ຽວຂ້ອງ. ການເປີດເຜີຍຂອງບໍລະສັດກ່ຽວກັບນະໂຍບາຍທາງບັນຊີທີ່ກ່ຽວຂ້ອງ ແລະ ລາຍລະອຽດຂອງການເປີດເຜີຍກ່ຽວກັບເຄື່ອງໃນສາງຂອງບໍລິສັດແມ່ນໄດ້ນຳສະເໜີໃນບົດອະທິບາຍເລກທີ 3 ແລະ ບົດອະທິບາຍເລກທີ 8.

ຄວາມຮັບຜິດຊອບຂອງຄະນະອຳນວຍການຕໍ່ກັບເອກະສານລາຍງານການເງິນ

ຄະນະອຳນວຍການຂອງບໍລິສັດແມ່ນມີຄວາມຮັບຜິດຊອບໃນການກະກຽມເອກະສານລາຍງານການເງິນ ໂດຍສອດຄ່ອງກັບນະໂຍບາຍດ້ານການການບັນຊີ ຕາມທີ່ໄດ້ອະທິບາຍໃນບົດອະທິບາຍເລກທີ 3 ຂອງເອກະສານລາຍງານການເງິນ, ການຄວບຄຸມພາຍໃນທີ່ຄະນະອຳນວຍການພິຈາລະນາວ່າ ມີຄວາມຈຳເປັນໃນການກະກຽມເອກະສານລາຍງານການເງິນ ໂດຍປາສະຈາກຂໍ້ຜິດພາດອັນໃຫຍ່ຫຼວງທີ່ອາດຈະເກີດຈາກການສໍ້ໂກງ ຫຼື ຂໍ້ຜິດພາດຕ່າງໆ.

ໃນການກະກຽມເອກະສານລາຍງານການເງິນ, ຄະນະອຳນວຍການມີຄວາມຮັບຜິດຊອບໃນການປະເມີນຄວາມອາດສາມາດຂອງບໍລິສັດທາງດ້ານຄວາມສືບເນື່ອງໃນການດຳເນີນທຸລະກິດ, ການເປີດເຜີຍຕາມຄວາມເໝາະສົມ, ບັນຫາທີ່ກ່ຽວຂ້ອງກັບຄວາມສືບເນື່ອງໃນການດຳເນີນທຸລະກິດ ແລະ ນຳໃຊ້ພື້ນຖານການບັນຊີວ່າດ້ວຍຫຼັກການແຫ່ງຄວາມສືບເນື່ອງໃນການດຳເນີນທຸລະກິດ ເວັ້ນເສຍແຕ່ ຄະນະອຳນວນການບໍລິສັດມີເຈດຕະນາຍົກເລີກກິດຈະການຂອງບໍລິສັດ ຫຼື ຢຸດກິດຈະການ.

A member firm of Ernst & Young Global Limited

Building a better working world

ຄວາມຮັບຜິດຊອບຂອງນັກກວດສອບອິດສະຫຼະຕໍ່ການກວດສອບເອກະສານລາຍງານການເງິນ

ຈຸດປະສົງໃນການກວດສອບຂອງພວກຂ້າພະເຈົ້າແມ່ນເພື່ອຮັບປະກັນ ການຮັບປະກັນທີ່ສົມເຫດສົມຜົນວ່າເອກະສານລາຍງານການເງິນໂດຍພາບລວມແມ່ນປາສະຈາກຂໍ້ຜິດພາດອັນໃຫຍ່ຫຼວງ, ບໍ່ວ່າຈະເປັນຍ້ອນການສໍ້ໂກງ ຫລື ຍ້ອນຄວາມຜິດພາດຕ່າງໆ ແລະ ເພື່ອການອອກບົດລາຍງານຂອງນັກກວດສອບອິດສະຫຼະທີ່ປະກອບມີຄຳເຫັນຂອງພວກຂ້າພະເຈົ້າ. ການຮັບປະກັນທີ່ສົມເຫດສົມຜົນແມ່ນການຮັບປະກັນໃນລະດັບສູງແຕ່ບໍ່ໄດ້ຮັບປະກັນວ່າ ການກວດສອບທີ່ໄດ້ດຳເນີນໂດຍສອດຄ່ອງກັບມາດຕະຖານດ້ານການກວດສອບສາກົນຈະສາມາດກວດພົບຂໍ້ຜິດພາດອັນໃຫຍ່ຫຼວງທີ່ອາດເກີດຂຶ້ນໄດ້ຕະຫຼອດທັງໝົດ. ຂໍ້ຜິດພາດສາມາດເກີດຂຶ້ນຈາກການສໍ້ໂກງ ຫຼື ຍ້ອນຂໍ້ຜິດພາດຕ່າງໆ ແມ່ນຖືກພິຈາລະນາວ່າ ສຳຄັນຈາກລາຍການດຽວ ຫຼື ຫຼາຍລາຍການລວມກັນ ແລະ ມີອິດທິພົນຕໍ່ການຕັດສິນໃຈທາງເສດຖະກິດຂອງຜູ້ນຳໃຊ້ເອກະສານລາຍງານການເງິນ.

ໃນການກວດສອບໂດຍສອດຄ່ອງກັບມາດຕະຖານດ້ານການກວດສອບສາກົນ, ພວກຂ້າພະເຈົ້າໄດ້ໃຊ້ການຕັດສິນ ແລະ ວິນິໄສແບບມືອາຊີບໃນຕະຫຼອດການດຳເນີນການກວດສອບ. ພວກຂ້າພະເຈົ້າຍັງໄດ້:

- ກຳນົດ ແລະ ປະເມີນບັນດາຄວາມສ່ຽງຂອງຂໍ້ຜິດພາດອັນໃຫຍ່ຫຼວງຂອງເອກະສານລາຍງານການເງິນ ບໍ່ວ່າຈະເປັນຍ້ອນການສໍ້ໂກງ ຫຼື ຍ້ອນຄວາມຜິດພາດຕ່າງໆ, ອອກແບບ ແລະ ດຳເນີນຂັ້ນຕອນການກວດສອບເພື່ອຮອງຮັບບັນດາຄວາມສ່ຽງເຫຼົ່ານັ້ນ ແລະ ເພື່ອຮັບປະກັນວ່າຈະໄດ້ຮັບເອົາຫຼັກຖານການກວດສອບທີ່ພຽງພໍ ແລະ ເໝາະສົມ ເພື່ອເປັນພື້ນຖານໃຫ້ແກ່ການອອກຄຳເຫັນຂອງພວກຂ້າພະເຈົ້າ. ຄວາມສ່ຽງຂອງການບໍ່ສາມາດກວດພົບຂໍ້ຜິດພາດອັນໃຫຍ່ຫຼວງທີ່ມີຜົນມາຈາກການສໍ້ໂກງ ແມ່ນສູງກວ່າຜົນທີ່ມາຈາກຄວາມຜິດພາດ, ເນື່ອງຈາກວ່າການສໍ້ໂກງອາດລວມມີ ການສົມຮູ້ຮ່ວມຄິດ, ການປອມແປງ, ການລະເລີຍໂດຍຕັ້ງໃຈ, ການບິດເບືອນ ຫຼື ລະເມີດຫຼັກການການຄວບຄຸມພາຍໃນ.
- ທຳຄວາມເຂົ້າໃຈກ່ຽວກັບການຄວບຄຸມພາຍໃນທີ່ກ່ຽວຂ້ອງກັບການກວດສອບເພື່ອອອກແບບຂັ້ນຕອນການກວດສອບທີ່ເໝາະສົມກັບສະພາບການຕ່າງໆ ແຕ່ບໍ່ໄດ້ມີຈຸດປະສົງເພື່ອສະແດງຄຳເຫັນກ່ຽວກັບປະສິດທິພາບຂອງການຄວບຄຸມພາຍໃນຂອງບໍລິສັດ.
- ປະເມີນຄວາມເໝາະສົມຂອງບັນດານະໂຍບາຍທາງບັນຊີທີ່ນຳໃຊ້ ແລະ ຄວາມສົມເຫດສົມຜົນຂອງການຄາດຄະເນທາງການບັນຊີ ແລະ ການເປີດເຜີຍທີ່ກ່ຽວຂ້ອງທີ່ໄດ້ຖືກນຳໃຊ້ໂດຍຄະນະບໍລິຫານ.
- ສະຫຼຸບຄວາມເໝາະສົມຂອງການນຳໃຊ້ພື້ນຖານຂອງບັນຊີວ່າດ້ວຍຫຼັກການແຫ່ງຄວາມສືບເນື່ອງໃນການດຳເນີນທຸລະກິດ ຂອງຄະນະອຳນວຍການ ໂດຍອີງຕາມຫຼັກຖານການກວດສອບທີ່ໄດ້ຮັບ ບໍ່ວ່າຈະເປັນຄວາມບໍ່ແນ່ນອນທີ່ສຳຄັນທີ່ອາດເກີດຂຶ້ນ ຈາກບັນດາເຫດການ ຫຼື ເງື່ອນໄຂທີ່ອາດເປັນຂໍ້ສົງໃສທີ່ສຳຄັນກ່ຽວກັບຄວາມອາດສາມາດຂອງບໍລິສັດໃນສືບເນື່ອງໃນການດຳເນີນທຸລະກິດ. ຖ້າຫາກພວກຂ້າພະເຈົ້າ ສະຫຼຸບໄດ້ວ່າມີຄວາມບໍ່ແນ່ນອນທີ່ສຳຄັນເກີດຂຶ້ນ, ພວກຂ້າພະເຈົ້າຈະໄດ້ລະບຸໃນບົດລາຍງານຂອງນັກກວດສອບອິດສະຫຼະ ໃນການເປີດເຜີຍທີ່ກ່ຽວຂ້ອງໃນເອກະສານລາຍງານການເງິນ ເພື່ອສະເໜີໃຫ້ເອົາໃຈໃສ່ຕື່ມອີກ ຫຼື ຖ້າຫາກຂາດການເປີດເຜີຍທີ່ພຽງພໍ, ພວກຂ້າພະເຈົ້າຈະຕ້ອງໄດ້ສະແດງຄຳເຫັນແບບມີເງື່ອນໄຂ. ການສະຫຼຸບຂອງພວກຂ້າພະເຈົ້າແມ່ນອີງຕາມຫຼັກຖານການກວດສອບທີ່ໄດ້ຮັບຈົນເຖິງວັນທີຂອງບົດລາຍງານຂອງນັກກວດສອບອິດສະຫຼະ. ເຖິງຢ່າງໃດກໍ່ຕາມ, ບັນດາເຫດການໃນອານະຄົດ ຫຼື ເງື່ອນໄຂອື່ນໆ ອາດເປັນສາເຫດເຮັດໃຫ້ບໍລິສັດຢຸດຕິການສືບຕໍ່ຄວາມສືບເນື່ອງໃນການດຳເນີນທຸລະກິດ.

ພວກຂ້າພະເຈົ້າໄດ້ປຶກສາຫາລືກັບຄະນະບໍລິຫານຂອງບໍລິສັດກ່ຽວກັບບັນຫາເຫຼົ່ານັ້ນ, ການວາງແຜນຂອບເຂດ ແລະ ເວລາຂອງການກວດສອບ ແລະ ຂໍ້ຄົບເຫັນທາງການກວດສອບທີ່ສຳຄັນ, ປະກອບມີບັນດາຂໍ້ບົກຜ່ອງທີ່ສຳຄັນຕ່າງໆໃນການຄວບຄຸມພາຍໃນທີ່ພວກຂ້າພະເຈົ້າໄດ້ພົບໃນລະຫວ່າງການກວດສອບຂອງພວກຂ້າພະເຈົ້າ.

ພວກຂ້າພະເຈົ້າ ໄດ້ໃຫ້ຖະແຫຼງການກັບຄະນະອຳນວຍການບໍລິສັດວ່າ ພວກຂ້າພະເຈົ້າໄດ້ປະຕິບັດຕາມທຸກຂໍ້ກຳນົດດ້ານກົດຈັນຍາບັນທີ່ກຳນົດເຊິ່ງກ່ຽວຂ້ອງກັບຄວາມເປັນເອກະລາດ, ການສື່ສານຂອງພວກຂ້າພະເຈົ້າກ່ຽວກັບຄວາມສຳພັນ ແລະ ບັນຫາອື່ນໆທີ່ອາດມີເຫດຜົນທີ່ພວກຂ້າພະເຈົ້າຄວນຄຳນຶງເຖິງຄວາມເປັນເອກະລາດຂອງພວກຂ້າພະເຈົ້າ ແລະ ການປ້ອງກັນທີ່ກ່ຽວຂ້ອງ ຖ້າມີ.

A member firm of Ernst & Young Global Limited

Building a better
working world

ຈາກກໍລະນີໃນການສື່ສານກັບຄະນະອຳນວຍການຂອງບໍລິສັດ, ພວກຂ້າພະເຈົ້າພິຈະລະນາວ່າສິ່ງເຫຼົ່ານັ້ນເປັນສິ່ງທີ່ສຳຄັນທີ່ສຸດໃນການກວດສອບເອກະສານການເງິນໃນໄລຍະປະຈຸບັນ ແລະ ເປັນບັນຫາທີ່ສຳຄັນໃນການກວດສອບ. ພວກຂ້າພະເຈົ້າໄດ້ອະທິບາຍເຫດການເຫຼົ່ານັ້ນໃນບົດລາຍງານນັກກວດສອບອິດສະຫຼະຂອງພວກຂ້າພະເຈົ້າ. ເວັ້ນເສຍແຕ່ຖ້າມີກົດໝາຍ ຫຼື ຂໍ້ບັງຄັບທີ່ບໍ່ອະນຸຍາດໃຫ້ເປີດເຜີຍຕໍ່ມວນຊົນ ຫຼື ເມື່ອໃນສະຖານະການທີ່ຫຍຸ້ງຍາກພວກຂ້າພະເຈົ້າຫາກພິຈາລະນາວ່າບັນຫາເຫຼົ່ານັ້ນບໍ່ຄວນສື່ສານລົງໃນບົດລາຍງານຂອງພວກຂ້າພະເຈົ້າ ເພາະອາດຈະເກີດຜົນກະທົບດ້ານລົບຈາກການກະທຳນັ້ນໆຫຼາຍກວ່າຜົນປະໂຫຍດຕໍ່ມວນຊົນກ່ຽວກັບການສື່ສານດັ່ງກ່າວ

ຕາງໜ້າ ແລະ ໃນນາມບໍລິສັດ ເອີນແອນຢັງ ລາວ ຈຳກັດ

ບໍລິສັດ ເອີນ ແອນ ຢັງ ລາວ ຈຳກັດ
ERNST & YOUNG LAO CO.,LTD

ແທ້ງ ທ້າຍ ຫງຽນ
ຮຸ້ນສ່ວນ

ນະຄອນຫຼວງວຽງຈັນ, ສປປ ລາວ

14 ເມສາ 2022

A member firm of Ernst & Young Global Limited

ບໍລິສັດ ຊີມັງລາວ ມະຫາຊົນ

ໃບລາຍງານຖານະທາງການເງິນ
ນະວັນທີ 31 ທັນວາ 2021

	ບົດອະທິບາຍ ເລກທີ	31 ທັນວາ 2021 ກີບ	31 ທັນວາ 2020 (ປັບປຸງໃໝ່) ກີບ
ຊັບສິນ			
ຊັບສິນບໍ່ໝຸນວຽນ			
ຊັບສິນ, ອາຄານ ແລະ ອຸປະກອນ	4	9,534,834,962	15,738,565,771
ຊັບສິນຜວມກໍ່ສ້າງ	5	6,822,689,571	6,820,639,571
ຊັບສົມບັດຄົງທີ່ບໍ່ມີຕົວຕົນ		328,548,475	328,548,475
ຊັບສິນບໍ່ໝຸນວຽນອື່ນໆ	6	210,400,000	241,960,000
ລວມຊັບສິນບໍ່ໝຸນວຽນ		**16,896,473,008**	**23,129,713,817**
ຊັບສິນໝຸນວຽນ			
ຊັບສິນໝຸນວຽນອື່ນໆ	7	18,000,000	190,460,000
ເຄື່ອງໃນສາງ	8	20,801,679,743	25,590,188,553
ໜີ້ຕ້ອງຮັບອື່ນໆ	9	38,921,847	121,947,501
ໜີ້ຕ້ອງຮັບທາງການຄ້າ	10	12,239,495,443	29,609,461,429
ເງິນສົດ	11	351,792,791	3,416,095,713
ລວມຊັບສິນໝຸນວຽນ		**33,449,889,824**	**58,928,153,196**
ລວມຊັບສິນທັງໝົດ		**50,346,362,832**	**82,057,867,013**

ບໍລິສັດ ຊີມັງລາວ ມະຫາຊົນ

ໃບລາຍງານຖານະທາງການເງິນ (ຕໍ່)
ນະວັນທີ 31 ທັນວາ 2021

	ບົດອະທິບາຍ ເລກທີ	*31 ທັນວາ 2021 ກີບ*	*31 ທັນວາ 2020 (ປັບປຸງໃໝ່) ກີບ*
ໜີ້ສິນ ແລະ ທຶນ			
ໜີ້ສິນໝຸນວຽນ			
ເງິນກູ້ຢືມ	12	2,000,000,000	8,000,000,000
ໜີ້ຕ້ອງສິ່ງການຄ້າ		2,211,807,006	4,751,971,174
ເງິນລ່ວງໜ້າຈາກລູກຄ້າ		152,773,000	152,773,000
ໜີ້ຕ້ອງສິ່ງໃຫ້ພາກສ່ວນທີ່ອື່ນທີ່ກ່ຽວຂ້ອງ	25	5,728,574,137	5,834,035,151
ພັນທະອາກອນ	13	5,210,837,226	5,170,698,904
ໜີ້ຕ້ອງສິ່ງໃຫ້ພະນັກງານ		9,494,267,488	11,682,408,305
ໜີ້ຕ້ອງສິ່ງອື່ນໆ	14	14,320,721,709	13,645,892,550
ລວມໜີ້ສິນໝຸນວຽນ		**39,118,980,566**	**49,237,779,084**
ລວມໜີ້ສິນທັງໝົດ		**39,118,980,566**	**49,237,779,084**
ທຶນ			
ທຶນຈົດທະບຽນທີ່ໄດ້ຖອກແລ້ວ	15	20,002,000,000	20,002,000,000
ມູນຄ່າຮຸ້ນ		18,385,975,511	18,385,975,511
ຄັງສຳຮອງຕາມລະບຽບການ		7,704,052,546	7,704,052,546
ຄັງສຳຮອງເພື່ອຂະຫຍາຍອາຄານ		18,549,465,596	18,549,465,596
ຂາດທຶນສະສົມ		(53,414,111,387)	(31,821,405,723)
ລວມທຶນ		**11,227,382,266**	**32,820,087,930**
ລວມໜີ້ສິນ ແລະ ທຶນທັງໝົດ		**50,346,362,832**	**82,057,867,014**

ທ່ານ ຈ່າງ ລີ
ຜູ້ອຳນວຍການໃຫຍ່

ທ່ານ ວິໄຊ ດວງສະຫວັດ
ຮອງຫົວໜ້າບັນຊີ ແລະ ການເງິນ

ນະຄອນຫຼວງວຽງຈັນ, ສປປ ລາວ

14 ເມສາ 2022

ບໍລິສັດ ຊີມັງລາວ ມະຫາຊົນ

ໃບລາຍງານຜົນການດຳເນີນງານ
ສຳລັບປີທີ່ສິ້ນສຸດ ວັນທີ 31 ທັນວາ 2021

	ບົດອະທິບາຍ ເລກທີ	*2021* ກີບ	*2020 (ປັບປຸງໃໝ່)* ກີບ
ລາຍຮັບຈາກການຂາຍສິນຄ້າ	16	-	26,342,629,966
ຕົ້ນທຶນຈາກການຂາຍ	17	-	(50,100,648,288)
ຂາດທຶນຂັ້ນຕົ້ນ		**-**	**(23,758,018,322)**
ລາຍໄດ້ຈາກການດຳເນີນງານອື່ນໆ	18	147,557,115	355,106,778
ລາຍຈ່າຍຈາກການດຳເນີນງານອື່ນໆ	19	(12,587,600,696)	-
ເງິນແຮໜີ້ທວງຍາກ		(3,406,151,417)	(508,273,554)
ຕົ້ນທຶນຈາກການຂາຍ ແລະ ຈັດຈຳໜ່າຍ	20	-	(1,552,507,710)
ລາຍຈ່າຍໃນການດຳເນີນງານ	21	(4,856,312,762)	(9,553,883,985)
ຂາດທຶນຈາກການດຳເນີນງານ		**(20,702,507,760)**	**(35,017,576,793)**
ລາຍຮັບທາງການເງິນ	22	1,005,650	10,372,529
ຕົ້ນທຶນທາງການເງິນ	23	(891,203,554)	(990,187,011)
ຂາດທຶນກ່ອນອາກອນ		**(21,592,705,664)**	**(35,997,391,275)**
ລາຍຈ່າຍອາກອນກຳໄລ	24	-	-
ຂາດທຶນສຸດທິຫຼັງອາກອນພາຍໃນປີ		**(21,592,705,664)**	**(35,997,391,275)**

ກະຊວງ ອຸດສາຫະກຳ ແລະ ການຄ້າ
ບໍລິສັດ ຊີມັງລາວ ມະຫາຊົນ
Lao Cement Public Company
ນະຄອນ ຫຼວງ ວຽງຈັນ

ທ່ານ ຈ່າງ ລີ
ຜູ້ອຳນວຍການໃຫຍ່

ທ່ານ ວິໄຊ ດວງສະຫວັດ
ຮອງຫົວໜ້າບັນຊີ ແລະ ການເງິນ

ນະຄອນຫຼວງວຽງຈັນ, ສປປ ລາວ

14 ເມສາ 2022

ບໍລິສັດ ຊີມັງລາວ ມະຫາຊົນ

ໃບລາຍງານສ່ວນປ່ຽນແປງທຶນເຈົ້າຂອງ
ສຳລັບປີທີ່ສິ້ນສຸດ ວັນທີ 31 ທັນວາ 2021

	ທຶນຈົດທະບຽນທີ່ ໄດ້ຖອກແລ້ວ *ກີບ*	*ມູນຄ່າຮຸ້ນ* *ກີບ*	*ຄັງສຳຮອງຕາມ ລະບຽບການ* *ກີບ*	*ຄັງສຳຮອງເພື່ອ ຂະຫຍາຍອາຄານ* *ກີບ*	*ຂາດທຶນສະສົມ* *ກີບ*	*ລວມທັງໝົດ* *ກີບ*
ນະວັນທີ 1 ມັງກອນ 2020	20,002,000,000	18,385,975,511	7,704,052,546	18,549,465,596	4,175,985,552	68,817,479,205
ຂາດທຶນສຸດທິພາຍໃນປີ (ປັບປຸງໃໝ່)	-	-	-	-	(35,997,391,275)	(35,997,391,275)
ນະວັນທີ 31 ທັນວາ 2020 (ປັບປຸງໃໝ່)	**20,002,000,000**	**18,385,975,511**	**7,704,052,546**	**18,549,465,596**	**(31,821,405,723)**	**32,820,087,930**
ນະວັນທີ 1 ມັງກອນ 2021 (ປັບປຸງໃໝ່)	20,002,000,000	18,385,975,511	7,704,052,546	18,549,465,596	(31,821,405,723)	32,820,087,930
ຂາດທຶນສຸດທິພາຍໃນປີ	-	-	-	-	(21,592,705,664)	(21,592,705,664)
ນະວັນທີ 31 ທັນວາ 2021	**20,002,000,000**	**18,385,975,511**	**7,704,052,546**	**18,549,465,596**	**(53,414,111,387)**	**11,227,382,266**

ທ່ານ ຈ່າງ ລີ
ຜູ້ອຳນວຍການໃຫຍ່

ທ່ານ ວິໄຊ ດວງສະຫວັດ
ຮອງຫົວໜ້າບັນຊີ ແລະ ການເງິນ

ນະຄອນຫຼວງວຽງຈັນ, ສປປ ລາວ

14 ເມສາ 2022

ບໍລິສັດ ຊີມັງລາວ ມະຫາຊົນ

ໃບລາຍງານກະແສເງິນສົດ
ສຳລັບປີທີ່ສິ້ນສຸດວັນທີ 31 ທັນວາ 2021

	ບົດອະທິບາຍ ເລກທີ	2021 ກີບ	2020 ປັບປຸງໃໝ່ ກີບ
ກິດຈະກຳການດຳເນີນງານ			
ຂາດທຶນກ່ອນອາກອນ		**(21,592,705,664)**	**(35,997,391,275)**
ດັດແກ້ສຳລັບ:			
ຄ່າຫຼຸ້ຍຫ້ຽນຂອງຊັບສິນ, ອາຄານ ແລະ ອຸປະກອນ	4	6,203,730,809	8,245,904,324
ເງິນແຮສຳລັບເຄື່ອງໃນສາງ	19	4,382,638,682	350,743,333
ເງິນແຮສຳລັບໜີ້ທວງຍາກ		3,406,151,417	508,273,554
ຂາດທຶນສຸດທິຈາກອັດຕາແລກປ່ຽນ		329,130,295	69,075,908
ກຳໄລຈາກກິດຈະກຳການລົງທຶນ		(1,005,650)	(10,372,529)
ລາຍຈ່າຍດອກເບ້ຍ	23	323,888,888	921,111,103
ການດັດແກ້ທຶນໝຸນວຽນ:			
ຫຼຸດລົງຂອງໜີ້ຕ້ອງຮັບການຄ້າ ແລະ ໜີ້ຕ້ອງຮັບອື່ນໆ, ລວມ ທັງຈຳນວນໜີ້ຄ້າງຊຳລະຈາກພາກສ່ວນທີ່ກ່ຽວຂ້ອງ		14,250,860,222	19,349,317,567
ຫຼຸດລົງຂອງເຄື່ອງໃນສາງ		405,870,128	13,226,474,364
ຫຼຸດລົງຂອງໜີ້ຕ້ອງສົ່ງການຄ້າ ແລະ ໜີ້ຕ້ອງສົ່ງອື່ນໆ, ລວມທັງ ຈຳນວນໜີ້ຄ້າງຊຳລະໃຫ້ພາກສ່ວນທີ່ກ່ຽວຂ້ອງ		(4,192,522,218)	(7,939,582,676)
ລາຍຈ່າຍດອກເບ້ຍເງິນກູ້ຢືມ		(341,111,110)	(914,444,437)
ກະແສເງິນສົດສຸດທິທີ່ນຳໃຊ້ໃນກິດຈະກຳການດຳເນີນງານ		**3,174,925,799**	**(2,190,890,764)**
ກິດຈະກຳການລົງທຶນ			
ການຈັດຊື້ຊັບສິນ, ອາຄານ ແລະ ອຸປະກອນ		(2,050,000)	(445,429,814)
ໄດ້ຮັບດອກເບ້ຍ		1,005,650	10,372,529
ກະແສເງິນສົດສຸດທິນຳໃຊ້ໃນກິດຈະກຳການລົງທຶນ		**(1,044,350)**	**(435,057,285)**
ກິດຈະກຳການເງິນ			
ການຮັບປະກັນຮຸ້ນ		-	-
ຈ່າຍເງິນປັນຜົນ		-	-
ດຳເນີນການກູ້ຢືມຈາກທະນາຄານ		-	8,000,000,000
ການຊຳລະເງິນກູ້ຢືມທະນາຄານ		(6,000,000,000)	(8,000,000,000)
ກະແສເງິນສົດສຸດທິຈາກກິດຈະກຳການເງິນ		**(6,000,000,000)**	**-**
ເງິນສົດຫຼຸດລົງສຸດທິ		(2,826,118,511)	(2,625,948,049)
ເງິນສົດໃນຕົ້ນປີ		3,416,095,713	6,042,043,762
ອັດຕາແລກປ່ຽນເງິນຕາຕ່າງປະເທດ		(238,184,371)	-
ເງິນສົດໃນທ້າຍປີ	11	**351,792,791**	**3,416,095,713**

ທ່ານ ຈ່າງ ສີ
ຜູ້ອຳນວຍການໃຫຍ່

ທ່ານ ວິໄຊ ດວງສະຫວັດ
ຮອງຫົວໜ້າບັນຊີ ແລະ ການເงิน

ນະຄອນຫຼວງວຽງຈັນ, ສປປ ລາວ

14 ເມສາ 2022

1. ຂໍ້ມູນບໍລິສັດ

ບໍລິສັດ ຊິມັງລາວ ມະຫາຊົນ ("ບໍລິສັດ") ກ່ອນໜ້ານີ້ແມ່ນ ບໍລິສັດ ຊິມັງລາວ ຈຳກັດ ຖືກສ້າງຕັ້ງຂຶ້ນຕາມກົດລະບຽບພາຍໃນ ຂອງບໍລິ ສັດທີ່ເຊັນຮັບຮອງ ທີ່ນະຄອນຫຼວງວຽງຈັນ, ສປປ ລາວ ໃນວັນທີ 15 ທັນວາ 1998 ລະຫວ່າງ ລັດວິສາຫະກິດ ພັດທະນາກະສິກຳ-ອຸດ ສາຫະກຳ ແລະ ບໍລິການຂາອອກ-ຂາເຂົ້າ ("ຝ່າຍ ກ") ກັບ ບໍລິສັດຮ່ວມມືສາກົນດ້ານເສດຖະກິດ-ເຕັກນິກຢຸນນານ ສປ ຈີນ ("ຝ່າຍ ຂ").

ວັນທີ 6 ທັນວາ 1999, ບໍລິສັດໄດ້ຮັບໃບທະບຽນຄັ້ງທຳອິດເລກທີ 1154/ຈທກ ອອກໂດຍ ກະຊວງອຸດສະຫະກຳ ແລະ ການ ຄ້າ, ເຊິ່ງບໍລິສັດໄດ້ຮັບອະນຸຍາດໃຫ້ດຳເນີນທຸລະກິດກ່ຽວກັບຊິມັງ ແລະ ຜະລິດຕະພັນຕ່າງໆທີ່ກ່ຽວຂ້ອງກັບຊິມັງເພື່ອການຈຳ ໜ່າຍພາຍໃນ ແລະ ສົ່ງອອກ.

ບໍລິສັດໄດ້ມີການປັບປຸງໃບທະບຽນວິສາຫະກິດດັ່ງລຸ່ມນີ້:

ໃບທະບຽນວິສາຫະກິດ	*ວັນທີ*
0078/ຈທກ	5 ເມສາ 2006
1719/ຈທກ	26 ກຸມພາ 2009
0244/ຈທກ	20 ກຸມພາ 2012
1436/ຈທກ	15 ພະຈິກ 2012
791/ຈທກ	13 ພະຈິກ 2015
1016/ຈທກ	5 ທັນວາ 2016
0247/ຈທກ	24 ມີນາ 2017
0688/ຈທກ	2 ສິງຫາ 2017
0160/ຈທກ	20 ກຸມພາ 2018

ພາຍໃນປີ, ກິດຈະກຳຫຼັກທີ່ດຳເນີນໂດຍບໍລິສັດແມ່ນມີດັ່ງນີ້:

- ຜະລິດຊິມັງ ແລະ ຜະລິດຕະພັນອື່ນໆທີ່ກ່ຽວຂ້ອງກັບຊິມັງ;
- ຂາຍສົ່ງ ແລະ ຂາຍຍ່ອຍຊິມັງ ແລະ ຜະລິດຕະພັນອື່ນໆທີ່ກ່ຽວຂ້ອງກັບຊິມັງສຳລັບການຊົມໃຊ້ພາຍໃນ ແລະ ສົ່ງອອກ.

ບໍລິສັດໄດ້ຢຸດກິດຈະກຳການຜະລິດທັງໝົດຊົ່ວຄາວນັບແຕ່ເດືອນ ເມສາ 2020 ຈົນເຖິງວັນທີອອກບົດລາຍງານສະບັບນີ້.

ສຳນັກງານໃຫຍ່ທີ່ໄດ້ລົງທະບຽນຂອງບໍລິສັດຕັ້ງຢູ່ ບ້ານໂພນພະເນົາ, ເມືອງໄຊເສດຖາ, ນະຄອນຫຼວງວຽງຈັນ, ສປປ ລາວ. ບໍລິສັດຍັງມີໂຮງງານຊິມັງວັງວຽງ ຫຼັງ 2 ຢູ່ເມືອງວັງວຽງ, ແຂວງ ວຽງຈັນ, ສປປ ລາວ.

ນະວັນທີ 31 ທັນວາ 2021, ບໍລິສັດມີພະນັກງານ 25 ຄົນ (31 ທັນວາ 2020: ພະນັກງານ 29 ຄົນ).

2. ພື້ນຖານຂອງການກະກຽມ

ເອກະສານລາຍງານການເງິນຂອງບໍລິສັດ ແມ່ນໄດ້ຖືກກະກຽມໂດຍນຳໃຊ້ຫຼັກການຕົ້ນທຶນເດີມ. ເອກະສານລາຍງານການເງິນ ສະບັບນີ້ແມ່ນໄດ້ຖືກລາຍງານເປັນສະກຸນເງິນລາວກີບ ("ກີບ") ເຊິ່ງເປັນສະກຸນເງິນຫຼັກທີ່ນຳໃຊ້ໃນການດຳເນີນທຸລະກິດຂອງ ບໍລິສັດ.

2. ພື້ນຖານຂອງການກະກຽມ (ຕໍ່)

ເອກະສານລາຍງານການເງິນຂອງບໍລິສັດ ແມ່ນໄດ້ຖືກກະກຽມໂດຍສອດຄ່ອງກັບນະໂຍບາຍການບັນຊີເຊິ່ງໄດ້ລະບຸໄວ້ໃນບົດອະທິບາຍເລກທີ 3 ເອກະສານລາຍງານການເງິນ. ນະໂຍບາຍການບັນຊີດັ່ງກ່າວ ບໍ່ໄດ້ມີຈຸດປະສົງໃນການນຳສະເໜີຖານະການເງິນ, ຜົນຂອງການດຳເນີນງານ ແລະ ກະແສເງິນສົດຂອງບໍລິສັດຕາມຫຼັກການບັນຊີສາກົນທີ່ຖືກຍອມຮັບໂດຍທົ່ວໄປ.

ຄວາມສືບເນື່ອງຂອງການດຳເນີນທຸລະກິດ

ບໍລິສັດໄດ້ຂາດທຶນສຸດທິມູນຄ່າ 21.59 ຕື້ກີບ ສຳລັບປີທີ່ສິ້ນສຸດ ວັນທີ 31 ທັນວາ 2021. ນະວັນທີດັ່ງກ່າວ, ບໍລິສັດມີຍອດຂາດທຶນສະສົມມູນຄ່າ 53.41 ຕື້ກີບ. ເນື່ອງຈາກຜົນກະທົບຂອງມາດຕະການປ້ອງກັນການແຜ່ລະບາດຂອງພະຍາດໂຄວິດ 19 ໂດຍລັດຖະບານແຫ່ງ ສປປ ລາວ ແລະ ບັນຫາທາງຫຍຸ້ງຍາກດ້ານເສດຖະກິດ, ບໍລິສັດໄດ້ຢຸດການຜະລິດທັງໝົດຊົ່ວຄາວຕັ້ງແຕ່ເດືອນ ເມສາ 2020. ໃນວັນທີ 25 ສິງຫາ 2020, ບໍລິສັດໄດ້ອອກແຈ້ງການເລກທີ 202/ບຊລ ກ່ຽວກັບການຢຸດຜະລິດຊົ່ວຄາວຈົນເຖິງການແຈ້ງການຄັ້ງຕໍ່ໄປ. ເງື່ອນໄຂດັ່ງກ່າວນີ້ໄດ້ຊີ້ໃຫ້ເຫັນຄວາມບໍ່ແນ່ນອນທີ່ມີຄວາມສຳຄັນເຊິ່ງອາດເກີດການສົງໄສຢ່າງໃຫຍ່ຫຼວງກ່ຽວກັບຄວາມສາມາດໃນການສືບເນື່ອງໃນການດຳເນີນທຸລະກິດຂອງບໍລິສັດ.

ບໍລິສັດໄດ້ລະບຸນັກລົງທຶນໃໝ່ແລ້ວ ແລະ ກຳລັງພັດທະນາແຜນການປັບໂຄງສ້າງລາຍລະອຽດເຊິ່ງບໍລິສັດສາມາດຟື້ນຟູການດຳເນີນງານໄດ້ຕາມປົກກະຕິ. ອີກທາງໜຶ່ງ, ຄະນະອຳນວຍການຂອງບໍລິສັດຍັງມີແຜນທາງການເງິນເພື່ອຊຳລະໜີ້ສິນໄລຍະສັ້ນເພື່ອດຳເນີນງານຂັ້ນຕ່ຳໃນປີຕໍ່ໆໄປ. ບົນພື້ນຖານນີ້, ຄະນະອຳນວຍການຂອງບໍລິສັດຍັງຕ້ອງພິຈາລະນາຄວາມເໝາະສົມທີ່ກະກຽມເອກະສານລາຍງານການເງິນທ້າຍປີບົນພື້ນຖານຄວາມສືບເນື່ອງຂອງການດຳເນີນທຸລະກິດ.

ເອກະສານລາຍງານການເງິນ ແມ່ນບໍ່ໄດ້ລວມລາຍການດັດແກ້ຂອງ ຊັບສິນ ແລະ ໜີ້ສິນ ທີ່ອາດຈະຈຳເປັນ ຖ້າຫາກ ບໍລິສັດບໍ່ມີຄວາມສາມາດດຳເນີນທຸລະກິດບົນພື້ນຖານຄວາມສືບເນື່ອງຂອງການດຳເນີນທຸລະກິດ.

ປີການບັນຊີ

ປີການບັນຊີຂອງບໍລິສັດແມ່ນ ເລີ່ມຈາກ ວັນທີ 1 ມັງກອນ ແລະ ສິ້ນສຸດ ວັນທີ 31 ທັນວາ.

3. ສະຫຼຸບນະໂຍບາຍການບັນຊີທີ່ສຳຄັນ

ຊັບສິນ, ອາຄານ ແລະ ອຸປະກອນ

ຊັບສິນ, ອາຄານ ແລະ ອຸປະກອນແມ່ນບັນທຶກຕາມມູນຄ່າຕົ້ນທຶນລົບໃຫ້ຄ່າຫຼຸ້ຍຫ້ຽນສະສົມ.

ຕົ້ນທຶນຂອງຊັບສິນ, ອາຄານ ແລະ ອຸປະກອນທີ່ຊື້ໂດຍບໍລິສັດ ເຊິ່ງປະກອບດ້ວຍລາຄາຊື້ ແລະ ທຸກຄ່າໃຊ້ຈ່າຍທີ່ຕິດພັນໂດຍກົງທີ່ເກີດຂຶ້ນໃນການເຮັດໃຫ້ຊັບສິນໃຫ້ຢູ່ໃນສະພາບທີ່ສາມາດໃຊ້ງານຕາມຈຸດປະສົງຂອງການນຳໃຊ້. ລາຍຈ່າຍສຳລັບການເພີ່ມເຕີມ, ການປັບປຸງ ແລະ ການຟື້ນຟູແມ່ນບັນທຶກເຂົ້າໃນມູນຄ່າຕົ້ນທຶນໃນຂະນະທີ່ລາຍຈ່າຍສຳລັບການບຳລຸງຮັກສາ ແລະ ການສ້ອມແປງແມ່ນບັນທຶກເຂົ້າໃນໃບລາຍງານຜົນການດຳເນີນງານ.

ເມື່ອລາຍການຂອງຊັບສິນ, ອາຄານ ແລະ ອຸປະກອນໄດ້ຖືກຂາຍ ຫຼື ສະສາງ, ຕົ້ນທຶນ ແລະ ຄ່າຫຼຸ້ຍຫ້ຽນສະສົມ ແມ່ນຈະຖືກຕັດອອກຈາກໃບລາຍງານຖານະການເງິນ ແລະ ທຸກໆກຳໄລ ຫຼື ຂາດທຶນຈາກການສະສາງ ແມ່ນຈະຖືກລວມຢູ່ໃນລາຍຮັບການດຳເນີນງານອື່ນໆ ຫຼື ບັນຊີລາຍຈ່າຍ ໃນໃບລາຍງານຜົນການດຳເນີນງານ ຕາມລຳດັບ.

ຊັບສິນພວມກໍ່ສ້າງ ສະແດງເຖິງຊັບສິນພາຍໃຕ້ການກໍ່ສ້າງ ເຊິ່ງປະກອບມີຄ່າໃຊ້ຈ່າຍໃນການກໍ່ສ້າງ ແລະ ຄ່າໃຊ້ຈ່າຍໂດຍກົງອື່ນໆ.

3. ສະຫຼຸບນະໂຍບາຍການບັນຊີທີ່ສຳຄັນ (ຕໍ່)

ຊັບສິນ, ອາຄານ ແລະ ອຸປະກອນ (ຕໍ່)

ຊັບສິນ, ອາຄານ ແລະ ອຸປະກອນ ທີ່ຖືກຫັກຄ່າຫຼຸ້ຍຫ້ຽນໝົດຕາມອາຍຸການນຳໃຊ້ຈະຖືກເກັບຮັກສາໄວ້ໃນບັນຊີ ຈົນກວ່າຈະບໍ່ມີການນຳໃຊ້ ແລະ ຈະບໍ່ມີຄ່າຫຼຸ້ຍຫຼ້ຽນທີ່ຖືກຮັບຮູ້ໃນໃບລາຍງານຜົນການດຳເນີນງານອີກ.

ຄ່າຫຼຸ້ຍຫ້ຽນ

ຄ່າຫຼຸ້ຍຫ້ຽນຂອງຊັບສິນ, ອາຄານ ແລະ ອຸປະກອນແມ່ນນຳໃຊ້ວິທີຄິດໄລ່ແບບສະເໝີຕົວຕາມອາຍຸການນຳໃຊ້ຂອງຊັບສິນແຕ່ລະປະເພດດັ່ງນີ້:

ອາຄານ ແລະ ສິ່ງປຸກສ້າງ	5 ຫາ 20 ປີ
ເຄື່ອງຈັກ ແລະ ອຸປະກອນ	5 ປີ
ພາຫະນະຂົນສົ່ງ	5 ປີ
ການປັບປຸງສິດທິໃນການເຊົ່າ	5 ຫາ 10 ປີ
ເຄື່ອງໃຊ້ຫ້ອງການ	5 ຫາ 10 ປີ
ອື່ນໆ	10 ປີ

ອາຍຸການໃຊ້ງານຂອງຊັບສິນເຊົ່າພວມປັບປຸງ ແມ່ນຖືກກຳນົດໂດຍການຄາດການຝ່າຍອຳນວຍການກ່ຽວກັບການໃຊ້ງານ ແລະ ອາດຈະແຕກຕ່າງກັບໄລຍະເວລາຂອງສັນຍາ.

ການຫັກຄ່າຫຼຸ້ຍຫ້ຽນຂອງຊັບສິນ, ອາຄານ ແລະ ອຸປະກອນທີ່ຊື້ເພີ່ມ ຫຼື ສະສາງອອກພາຍໃນປີ ແມ່ນຄິດໄລ່ອີງຕາມສັດສ່ວນໄລຍະເວລາໃນການນຳໃຊ້ນັບແຕ່ມື້ທີ່ເລີ່ມຕົ້ນນຳໃຊ້ ແລະ ມື້ທີ່ສະສາງອອກຕົວຈິງ. ບໍ່ມີການຫັກຄ່າຫຼຸ້ຍຫ້ຽນສຳລັບຊັບສິນພວມກໍ່ສ້າງຈົນກວ່າຈະເຖິງເວລາທີ່ຊັບສິນດັ່ງກ່າວສຳເລັດ ແລະ ຖືກນຳໃຊ້.

ຊັບສິນບັດຄົງທີ່ບໍ່ມີຕົວຕົນ

ຊັບສິນບັດຄົງທີ່ບໍ່ມີຕົວຕົນ ໝາຍເຖິງສິດໃນການນຳໃຊ້ທີ່ດິນທີ່ບໍ່ກຳນົດໄລຍະເວລາການນຳໃຊ້ ແລະ ຖືກລາຍງານໃນມູນຄ່າຕົ້ນທຶນ. ຕົ້ນທຶນຂອງສິດໃນການນຳໃຊ້ທີ່ດິນ ເຊິ່ງປະກອບດ້ວຍ ລາຄາຊື້ ແລະ ຕົ້ນທຶນໂດຍກົງຕ່າງໆແມ່ນຈະບໍ່ມີການຫັກຄ່າເສື່ອມ.

ຊັບສິນບໍ່ໝຸນວຽນອື່ນໆ

ຊັບສິນທີ່ຈັດຊື້, ຄຸ້ມຄອງ ແລະ ນຳໃຊ້ໂດຍບໍລິສັດ ເຊິ່ງອອກຊື່ພາຍໃຕ້ຊື່ຂອງພາກສ່ວນກ່ຽວຂ້ອງອື່ນ ແມ່ນຈະລາຍງານເປັນຊັບສິນບໍ່ໝຸນວຽນອື່ນໆຂອງບໍລິສັດ. ຄ່າຫຼຸ້ຍຫຼ້ຽນແມ່ນຖືກຄິດໄລ່ ແບບສະເໝີຕົວຕາມອາຍຸການນຳໃຊ້ຕະຫຼອດໄລຍະ 20 ປີ.

ສັນຍາເຊົ່າ

ໃນການກຳນົດຕົກລົງເປັນສັນຍາເຊົ່າ, ຫຼື ປະກອບດ້ວຍສັນຍາເຊົ່ານັ້ນ, ແມ່ນອີງໃສ່ເນື້ອໃນຂອງຂໍ້ຕົກລົງ ແລະ ຮຽກຮ້ອງໃຫ້ມີການປະເມີນວ່າການປະຕິບັດຕາມຂໍ້ຕົກລົງນັ້ນຂຶ້ນຢູ່ກັບການໃຊ້ຊັບສິນ ຫຼື ຊັບສິນສະເພາະ ແລະ ການຕົກລົງທີ່ບົ່ງບອກເຖິງສິດໃນການໃຊ້ຊັບສິນ.

3. ສະຫຼຸບນະໂຍບາຍການບັນຊີທີ່ສຳຄັນ (ຕໍ່)

ບໍລິສັດໃນຖານະຜູ້ເຊົ່າ

ສັນຍາເຊົ່າ, ເຊິ່ງຄວາມສ່ຽງ ແລະ ຜົນປະໂຫຍດທັງໝົດຂອງຄວາມເປັນເຈົ້າຂອງລາຍການທີ່ເຊົ່າ ບໍ່ໄດ້ໂອນໄປຫາບໍລິສັດເປັນສາລະສຳຄັນຄືສັນຍາເຊົ່າດຳເນີນງານ. ເງິນທີ່ຈ່າຍຕາມສັນຍາເຊົ່າດຳເນີນງານຖືກຮັບຮູ້ເປັນລາຍຈ່າຍຢູ່ໃນໃບລາຍງານຜົນການດຳເນີນງານໂດຍວິທີເສັ້ນຊື່ຕະຫຼອດອາຍຸການສັນຍາເຊົ່າ. ໜີ້ຕ້ອງສິ່ງຄ່າເຊົ່າທີ່ອາດຈະເກີດຂຶ້ນແມ່ນຖືກຮັບຮູ້ເປັນລາຍຈ່າຍໃນປີທີ່ລາຍຈ່າຍດັ່ງກ່າວເກີດຂຶ້ນ.

ເຄື່ອງໃນສາງ

ເຄື່ອງໃນສາງແມ່ນຖືກສະແດງໃນມູນຄ່າທີ່ຕ່ຳກວ່າຕົ້ນທຶນທີ່ເກີດຂຶ້ນໃນການນຳເອົາເຄື່ອງໃນສາງມາຢູ່ໃນສະຖານທີ່ ແລະ ສະພາບໃນປະຈຸບັນ ແລະ ຖືກຮັບຮູ້ຕາມມູນຄ່າສຸດທິທີ່ໄດ້ຮັບ.

ມູນຄ່າສຸດທິທີ່ໄດ້ຮັບ ແມ່ນລາຄາທີ່ຄາດວ່າຈະຂາຍຕາມເງື່ອນໄຂທາງທຸລະກິດທົ່ວໄປ ລົບຄ່າใช้ຈ່າຍຄາດຄະເນ ທີ່ຈະເຮັດໃຫ້ເປັນສິນຄ້າສຳເລັດຮູບ ແລະ ຄ່າใช้ຈ່າຍຄາດຄະເນທີ່ເກີດຂຶ້ນຈາກການຂາຍ.

ເຄື່ອງໃນສາງ (ຕໍ່)

ລະບົບການຕີດຕາມສາງເປັນໄລຍະ ແມ່ນຖືກນຳใช้ໃນການບັນທຶກເຄື່ອງໃນສາງເຊິ່ງຖືກຕີມູນຄ່າດັ່ງຕໍ່ໄປນີ້:

ວັດຖຸດິບ, ວັດຖຸສິ້ນເປືອງ, ເຄື່ອງມື ແລະ ອຸປະກອນ	- ຕົ້ນທຶນແມ່ນ ຄິດໄລ່ຕາມການຕົ້ນທຶນສະເລ່ຍຖ່ວງໜັກ.
ສິນຄ້າກຳລັງຜະລິດ ແລະ ສິນຄ້າສຳເລັດຮູບ	- ຕົ້ນທຶນຂອງວັດຖຸດິບ ແລະ ຄ່າແຮງງານທາງກົງບວກກັບຄ່າใช้ຈ່າຍການຜະລິດໂດຍອີງໃສ່ຄວາມສາມາດປະຕິບັດງານປົກກະຕິ ບົນພື້ນຖານມູນຄ່າຕົ້ນທຶນສະເລ່ຍຖ່ວງໜັກ

ເງິນແຮສຳລັບຄ່າເສື່ອມມູນຄ່າເຄື່ອງໃນສາງ

ເງິນແຮສຳລັບຄ່າເສື່ອມມູນຄ່າເຄື່ອງໃນສາງແມ່ນເກີດຈາກການປະເມີນການສູນເສຍທີ່ເກີດຂຶ້ນຍ້ອນການເສື່ອມມູນຄ່າ (ຈາກການຫຼຸດລົງ, ຄວາມເສຍຫາຍ, ການລ້າສະໄໝ ແລະ ອື່ນໆ) ຂອງເຄື່ອງໃນສາງ ໂດຍປະເມີນຕາມຫລັກຖານທີ່ເໝາະສົມຂອງການເສື່ອມມູນຄ່າທີ່ມີຢູ່ນະວັນທີຂອງໃບລາຍງານຖານະການເງິນ.

ການເພີ່ມຂຶ້ນ ແລະ ຫຼຸດລົງຂອງຍອດເຫຼືອເງິນແຮແມ່ນບັນທຶກເຂົ້າຕົ້ນທຶນໃນການຂາຍ ແລະ ການຈຳໜ່າຍ ສະແດງໃນໃບລາຍງານຜົນການດຳເນີນງານ.

ໜີ້ຕ້ອງຮັບການຄ້າ ແລະ ເງິນແຮໜີ້ທວງຍາກ

ໜີ້ຕ້ອງຮັບການຄ້າ ແມ່ນສະແດງຕາມມູນຄ່າສຸດທິຂອງໜີ້ຕ້ອງຮັບການຄ້າທັງໝົດ ແລະ ເງິນແຮໜີ້ທວງຍາກ.

ບໍລິສັດມີນະ�โยบายເງິນແຮໜີ້ຕ້ອງຮັບທວງຍາກສຳລັບໜີ້ຕ້ອງຮັບການຄ້າ ໂດຍອີງຕາມຈຳນວນມື້ກາຍກຳນົດຂອງໜີ້ຕ້ອງຮັບການຄ້າດັ່ງລຸ່ມນີ້:

ໄລຍະເກີນກຳນົດ	*ອັດຕາເງິນແຮ*
6 ເດືອນ ຫາ 1 ປີ	30%
1 ປີ ຫາ 2 ປີ	50%
ຫຼາຍກວ່າ 2 ປີ	100%

3. ສະຫຼຸບນະໂຍບາຍການບັນຊີທີ່ສຳຄັນ (ຕໍ່)

ເງິນສົດ

ເງິນສົດປະກອບດ້ວຍເງິນສົດໃນຄັງ ແລະ ເງິນຝາກທະນາຄານ.

ຕົ້ນທຶນເງິນກູ້

ຕົ້ນທຶນເງິນກູ້ ປະກອບດ້ວຍດອກເບ້ຍ ແລະ ລາຍຈ່າຍອື່ນໆທີ່ເກີດຂຶ້ນ ທີ່ກ່ຽວຂ້ອງກັບການກູ້ຢືມເງິນທຶນ. ຕົ້ນທຶນເງິນກູ້ ແມ່ນຖືກບັນທຶກເປັນລາຍຈ່າຍພາຍໃນປີທີ່ລາຍຈ່າຍດັ່ງກ່າວເກີດຂຶ້ນ.

ໜີ້ຕ້ອງສົ່ງການຄ້າ, ລາຍຈ່າຍຄ້າງຈ່າຍ ແລະ ໜີ້ຕ້ອງສົ່ງອື່ນໆ

ໜີ້ຕ້ອງສົ່ງ ແລະ ລາຍຈ່າຍຄ້າງຈ່າຍ ຈະຖືກຮັບຮູ້ເປັນຈຳນວນທີ່ຕ້ອງຈ່າຍໃນອານາຄົດ ສຳລັບສິນຄ້າ ແລະ ການບໍລິການທີ່ໄດ້ຮັບ, ບໍ່ວ່າໃບເກັບເງິນຈະຖືກສົ່ງ ຫຼື ຍັງບໍ່ສົ່ງໃຫ້ບໍລິສັດກໍ່ຕາມ.

ທຶນຈົດທະບຽນທີ່ຖອກແລ້ວ

ທຶນຈົດທະບຽນທີ່ຖອກແລ້ວ ຈະຖືກຮັບຮູ້ໃນໃບລາຍງານຖານະການເງິນເມື່ອໄດ້ຮັບເງິນຈາກຂາຮຸ້ນ ໃນກໍລະນີທີ່ຖອກທຶນຈົດທະບຽນເປັນເງິນສົດ ຫຼື ເມື່ອມີການອະນຸມັດຈາກຂາຮຸ້ນໃນກໍລະນີທີ່ບໍ່ແມ່ນເງິນສົດ ແລະ ໃບຢັ້ງຢືນຮຸ້ນຖືກອອກໃຫ້. ທຸກໆທຶນຈົດທະບຽນທີ່ຍັງບໍ່ທັນຖອກໂດຍອີງຕາມກົດລະບຽບຂອງບໍລິສັດ, ໃບທະບຽນວິສາຫະກິດ ແລະ ໃບທະ ບຽນ ອາກອນແມ່ນບໍ່ໄດ້ຖືກຮັບຮູ້ໃນໃບລາຍງານຖານະການເງິນ.

ຄັງສຳຮອງມູນຄ່າຮຸ້ນ

ມູນຄ່າຮຸ້ນຖືກຮັບຮູ້ເວລາມີການອອກຮຸ້ນເພີ່ມ, ນະມູນຄ່າສ່ວນເກີນລະຫວ່າງລາຄາສະເໜີຂາຍຂອງຮຸ້ນທີ່ອອກເພີ່ມ ແລະ ມູນຄ່າໜ້າບັດ, ຫຼັງຈາກຫັກຕົ້ນທຶນຕ່າງໆທີ່ກ່ຽວຂ້ອງກັບການອອກຮຸ້ນ (ເຊັ່ນ: ຄ່າທຳນຽມການຄ້ຳປະກັນການອອກຮຸ້ນ ແລະ ລ່າຍຈ່າຍຕ່າງໆທີ່ກ່ຽວຂ້ອງໃນການຕີມູນຄ່າ, ລາຍຈ່າຍຄ່າທີ່ປຶກສາ).

ຄັງສຳຮອງ

ອີງຕາມກົດໝາຍວິສາຫະກິດ ເລກທີ 46/ສພຊ ລົງວັນທີ 26 ທັນວາ 2013, ບໍລິສັດມະຫາຊົນຖືກຮຽກຮ້ອງໃຫ້ມີການຫັກກຳໄລສຸດທິຕາມຈຳນວນທີ່ເໝາະສົມເຂົ້າເປັນຄັງແຮຕາມລະບຽບການ.

ຄັງສຳຮອງຕາມລະບຽບການເປັນຄັງສຳຮອງເພື່ອຮັບປະກັນຄວາມສ່ຽງທີ່ຈະເກີດຂຶ້ນ, ເຊິ່ງ 10% ຂອງກຳໄລສຸດທິຈະຖືກຫັກເຂົ້າໃນຄັງສຳຮອງດັ່ງກ່າວ, ຫຼັງຈາກຫັກຂາດທຶນສະສົມ. ເມື່ອຄັງສຳຮອງດັ່ງກ່າວຫາກມີເງິນສະສົມໄດ້ເຄິ່ງໜຶ່ງຂອງທຶນຈົດທະບຽນ, ບໍລິສັດ ອາດຈະໂຈະການຫັກກຳໄລເຂົ້າຄັງສຳຮອງດັ່ງກ່າວ, ເວັ້ນເສຍແຕ່ໄດ້ຮັບອະນຸມັດຈາກເຈົ້າຂອງບໍລິສັດ.

ຄັງສຳຮອງອື່ນໆປະກອບມີ ຄັງສຳຮອງສະຫວັດດີການ ແລະ ຄັງສຳຮອງເພື່ອຂະຫຍາຍອາຄານ ເຊິ່ງຫັກຈາກກຳໄລສະສົມຕາມຄວາມເໝາະສົມອີງຕາມກົດລະບຽບພາຍໃນຂອງບໍລິສັດ ລົງວັນທີ 15 ທັນວາ ປີ 1998. ຈຳນວນເງິນທີ່ເໝາະສົມຈະຖືກກຳນົດໂດຍສະພາບໍລິຫານຂອງບໍລິສັດໃນແຕ່ລະປີ.

ຄັງສຳຮອງຂອງປີການບັນຊີປະຈຸບັນຖືກຫັກຈາກກຳໄລສຸດທິຂອງປີຜ່ານມາຕາມການອະນຸມັດໃນກອງປະຊຸມຂາຮຸ້ນປະຈຳປີ.

3. ສະຫຼຸບນະໂຍບາຍການບັນຊີທີ່ສຳຄັນ (ຕໍ່)

ເງິນຕາຕ່າງປະເທດ

ເອກະສານລາຍງານເງິນ ຖືກລາຍງານເປັນສະກຸນເງິນກີບ ເຊິ່ງເປັນສະກຸນເງິນທີ່ບໍລິສັດໃຊ້ໃນການເຄື່ອນໄຫວ ແລະ ລາຍງານ. ບັນດາລາຍການເຄື່ອນໄຫວທີ່ເປັນສະກຸນເງິນອື່ນໆນອກເໜືອຈາກສະກຸນເງິນກີບ ແມ່ນຈະຖືກບັນທຶກໃນເບື້ອງຕົ້ນໂດຍໃຊ້ອັດຕາແລກປ່ຽນໃນມື້ທີ່ລາຍການເຄື່ອນໄຫວເກີດຂຶ້ນ. ຊັບສິນ ແລະ ໜີ້ສິນທາງການເງິນທີ່ເປັນສະກຸນເງິນຕ່າງປະເທດແມ່ນຈະຖືກປ່ຽນເປັນເງິນກີບ ໂດຍນຳໃຊ້ອັດຕາແລກປ່ຽນໃນມື້ຂອງໃບລາຍງານຖານະການເງິນ. ກຳໄລ ແລະ ຂາດທຶນທັງ ໝົດຈະຖືກບັນທຶກເປັນລາຍຮັບທາງການເງິນ ແລະ ລາຍຈ່າຍທາງການເງິນຕາມລຳດັບໃນໃບລາຍງານຜົນການດຳເນີນງານ.

ການຮັບຮູ້ລາຍຮັບ

ລາຍຮັບຖືກຮັບຮູ້ ເມື່ອມີຄວາມເປັນໄປໄດ້ວ່າ ຜົນປະໂຫຍດທາງດ້ານເສດຖະກິດຈະໄດ້ຮັບໂດຍບໍລິສັດ ແລະ ລາຍຮັບດັ່ງກ່າວຕ້ອງສາມາດວັດແທກໄດ້ຢ່າງສົມເຫດສົມຜົນ. ລາຍຮັບຈະຖືກວັດແທກດ້ວຍມູນຄ່າຍຸຕິທຳຂອງລາຍຮັບ ຫຼື ໜີ້ຕ້ອງຮັບທີ່ຖືກພິຈາລະນາ, ໂດຍບໍ່ລວມສ່ວນຫຼຸດທາງການຄ້າ, ການສົ່ງຄືນ ແລະ ການຮັບສິນຄ້າຄືນ. ເງື່ອນໄຂສະເພາະໃນການຮັບຮູ້ ດັ່ງຕໍ່ໄປນີ້ຕ້ອງສອດຄ່ອງກ່ອນລາຍຮັບຈະຖືກຮັບຮູ້:

ການຂາຍສິນຄ້າ

ລາຍຮັບຖືກຮັບຮູ້ເມື່ອຄວາມສ່ຽງອັນເປັນສາລະສຳຄັນ ແລະ ຜົນຕອບແທນຂອງການເປັນເຈົ້າຂອງຕໍ່ສິນຄ້າໄດ້ຖືກໂອນຜ່ານໄປຍັງຜູ້ຊື້, ໂດຍທົ່ວໄປ ແມ່ນອີງຕາມການຂົນສົ່ງສິນຄ້າ.

ດອກເບ້ຍ

ລາຍຮັບຈະຖືກຮັບຮູ້ເມື່ອມີດອກເບ້ຍຄ້າງຮັບ (ໂດຍຄຳນຶງເຖິງຜົນຕອບແທນຂອງຊັບສິນ) ເວັ້ນເສຍແຕ່ວ່າມີຂໍ້ສົງໄສໃນການເກັບໜີ້.

ອາກອນ

ອາກອນກຳໄລ ແມ່ນການຄາດຄະເນໜີ້ຕ້ອງສົ່ງອາກອນ ຕາມກຳໄລທີ່ຕ້ອງເສຍອາກອນພາຍໃນປີ, ໂດຍນຳໃຊ້ອັດຕາອາກອນກຳໄລທີ່ປະກາດໃຊ້ນະມື້ຂອງໃບລາຍງານຖານະການເງິນ ແລະ ນຳໃຊ້ໃນໄລຍະຂອງການນຳໃຊ້ບົດລາຍງານ ແລະ ທຸກໆການດັດແກ້ຂອງໜີ້ຕ້ອງສົ່ງອາກອນກຳໄລຂອງປີທີ່ຜ່ານມາ.

ໜີ້ອາກອນຕ້ອງສົ່ງອື່ນໆ ປະກອບມີ ອາກອນມູນຄ່າເພີ່ມ ແລະ ອາກອນລາຍໄດ້ສ່ວນບຸກຄົນຂອງພະນັກງານ.

ອາກອນມູນຄ່າເພີ່ມແມ່ນໜີ້ສິນອາກອນທີ່ຕ້ອງຈ່າຍ ໂດຍກຳນົດຈາກລາຍຮັບສຳລັບໄລຍະທີ່ມີການຄິດໄລ່ ໂດຍນຳໃຊ້ອັດຕາອາກອນທີ່ເໝາະສົມພາຍໃນປີ.

ອາກອນລາຍໄດ້ສ່ວນບຸກຄົນ ແມ່ນອາກອນທີ່ຕ້ອງຈ່າຍໃນມູນຄ່າເງິນເດືອນທີ່ຈ່າຍໃຫ້ພະນັກງານຂອງໄລຍະດັ່ງກ່າວ ເຊິ່ງຄິດໄລ່ໂດຍນຳໃຊ້ອັດຕາອາກອນທີ່ເໝາະສົມພາຍໃນປີ.

ທຸກໆການດັດແກ້ທີ່ກ່ຽວກັບມູນຄ່າຂອງອາກອນຕ້ອງຈ່າຍຂອງປີທີ່ຜ່ານມາ ເຊິ່ງມີຜົນມາຈາກການໄລ່ລຽງອາກອນຂອງເຈົ້າໜ້າທີ່ສ່ວຍສາອາກອນແມ່ນໄດ້ບັນທຶກໂດຍກົງໃນກຳໄລສະສົມ.

3. ສະຫຼຸບນະໂຍບາຍການບັນຊີທີ່ສຳຄັນ (ຕໍ່)

ລາຍການເຄື່ອນໄຫວຂອງພາກສ່ວນທີ່ກ່ຽວຂ້ອງ

ຄູ່ສັນຍາຖືກພິຈາລະນາເປັນພາກສ່ວນທີ່ກ່ຽວຂ້ອງ ຖ້າຫາກວ່າ ພາກສ່ວນດັ່ງກ່າວມີຄວາມສາມາດໃນການຄວບຄຸມ ຫຼື ມີອິດທິພົນທີ່ສຳຄັນຕໍ່ກັນ ໃນການຕັດສິນໃຈທາງດ້ານການເງິນ ແລະ ການດຳເນີນງານ ຫຼື ຢູ່ພາຍໃຕ້ການຄວບຄຸມຮ່ວມກັນ ຫຼື ມີອິດທິພົນທີ່ສຳຄັນຮ່ວມກັນ.

ລາຍການເຄື່ອນໄຫວກັບພາກສ່ວນທີ່ກ່ຽວຂ້ອງແມ່ນເກີດຂຶ້ນໂດຍອີງຕາມລາຄາຕະຫຼາດ ຫຼື ໃນກໍລະນີທີ່ບໍ່ມີລາຄາຕະຫຼາດໃນ ລາຄາທີ່ຕົກລົງຕາມສັນຍາ.

ລາຍຈ່າຍຈາກການດຳເນີນງານອື່ນໆ

ລາຍຈ່າຍທີ່ກ່ຽວຂ້ອງກັບໂຮງງານທີ່ຢຸດຊົ່ວຄາວຈະຮັບຮູ້ເປັນຄ່າໃຊ້ຈ່າຍໃນການດຳເນີນງານອື່ນ.

ຂໍ້ມູນສ່ວນຕ່າງໆ

ສ່ວນງານເປັນອົງປະກອບທີ່ກຳນົດແຍກອອກຕ່າງຫາກໂດຍບໍລິສັດເຊິ່ງປະກອບທຸລະກິດການສະໜອງສິນຄ້າ ຫຼື ການບໍລິການທີ່ກ່ຽວຂ້ອງ (ສ່ວນທຸລະກິດ) ຫຼື ການສະໜອງສິນຄ້າ ຫຼື ການບໍລິການໃນສະພາບແວດລ້ອມທາງເສດຖະກິດສະເພາະ (ສ່ວນງານທາງພູມສາດ), ທີ່ມີຄວາມສ່ຽງ ແລະ ຜົນຕອບແທນທີ່ແຕກຕ່າງໄປຈາກນັ້ນຂອງສ່ວນອື່ນໆ.

ກິດຈະກຳຫຼັກຂອງບໍລິສັດຕາມໃບອະນຸຍາດດຳເນີນທຸລະກິດ ແມ່ນການຜະລິດ ແລະ ຈຳໜ່າຍປູນ ແລະ ຜະລິດຕະພັນອື່ນໆທີ່ກ່ຽວຂ້ອງກັບປູນ. ນັ້ນຈາກນີ້, ກິດຈະກຳເຫຼົ່ານີ້ແມ່ນດຳເນີນຢູ່ໃນ ສປປ ລາວ ເທົ່ານັ້ນ. ດັ່ງນັ້ນ, ຄວາມສ່ຽງ ແລະ ຜົນຕອບແທນຂອງບໍລິສັດຈຶ່ງບໍ່ໄດ້ຮັບຜົນກະທົບຈາກການບໍລິການຂອງບໍລິສັດທີ່ບໍລິສັດສະໜອງ ຫຼື ສະຖານທີ່ທີ່ບໍລິສັດດຳເນີນທຸລະກິດ. ດັ່ງນັ້ນ, ການຄຸ້ມຄອງຂອງບໍລິສັດແມ່ນຖືວ່າມີພຽງແຕ່ສ່ວນດຽວສຳລັບສ່ວນທຸລະກິດ ແລະ ສ່ວນພູມສາດ ແລະ ດັ່ງນັ້ນ ຈຶ່ງບໍ່ຈຳເປັນຕ້ອງນຳສະເໜີຂໍ້ມູນຕາມສ່ວນງານ.

4. ຊັບສິນ, ອາຄານ ແລະ ອຸປະກອນ

	ອາຄານ ແລະ ສິ່ງປຸກສ້າງ ກີບ	*ເຄື່ອງຈັກ ແລະ ອຸປະກອນ ກີບ*	*ພາຫະນະຂົນສົ່ງ ກີບ*	*ການປັບປຸງສິດທິໃນ ການເຊົ່າ ກີບ*	*ເຄື່ອງໃຊ້ຫ້ອງການ ກີບ*	*ອື່ນໆ ກີບ*	*ລວມ ກີບ*
ຕົ້ນທຶນ							
ທີ 1 ມັງກອນ 2021	134,382,315,687	213,077,367,762	21,688,472,198	1,855,693,263	2,088,589,576	436,983,816	373,529,422,302
ທີ 31 ທັນວາ 2021	134,382,315,687	213,077,367,762	21,688,472,198	1,855,693,263	2,088,589,576	436,983,816	373,529,422,302
ຄ່າໝົ້ຍຫ້ຽນສະສົມ							
ທີ 1 ມັງກອນ 2021	122,541,185,849	211,147,850,346	19,879,762,375	1,696,484,569	2,088,589,576	436,983,816	357,790,856,531
ຫັກຄ່າໝົ້ຍຫ້ຽນໃນປີ	5,386,158,993	328,517,549	424,243,940	64,810,327	-	-	6,203,730,809
ທີ 31 ທັນວາ 2021	127,927,344,842	211,476,367,895	20,304,006,315	1,761,294,896	2,088,589,576	436,983,816	363,994,587,340
ມູນຄ່າສຸດທິຕາມບັນຊີ							
ທີ 31 ທັນວາ 2020	11,841,129,838	1,929,517,416	1,808,709,823	159,208,694	-	-	15,738,565,771
ທີ 31 ທັນວາ 2021	6,454,970,845	1,600,999,867	1,384,465,883	94,398,367	-	-	9,534,834,962

ຊັບສິນບັດຄົງທັງໝົດຂອງບໍລິສັດໄດ້ຖືກເອົາໄປເປັນຫຼັກຊັບຄ້ຳປະກັນໃນການກູ້ຍືມຕາມທີ່ໄດ້ເປີດເຜີຍໃນບົດອະທິບາຍ ເລກທີ 12.

5. ຊັບສິນພວມກໍ່ສ້າງ

	31 ທັນວາ 2021	*31 ທັນວາ 2020*
	ກີບ	*ກີບ*
ໂຄງການຂຸດຄົ້ນບໍ່ແຮ່ ຄອນພຸກ	5,112,200,406	5,110,150,406
ໂຄງການກໍ່ສ້າງໂຮງງານໄລຍະສອງ	1,710,489,165	1,710,489,165
	6,822,689,571	**6,820,639,571**

6. ຊັບສິນບໍ່ໝຸນວຽນອື່ນໆ

ຊັບສິນບໍ່ໝຸນວຽນອື່ນໆ ແມ່ນສະແດງເປັນມູນຄ່າສຸດທິຂອງທີ່ດິນ ແລະ ເຮືອນ ເຊິ່ງຊື້ໂດຍບໍລິສັດ ແຕ່ຈົດທະບຽນພາຍໃຕ້ຊື່ ທ່ານ ວັນທອງ ສິດທິກຸນ - ອະດີດ ປະທານຂອງບໍລິສັດ.

7. ຊັບສິນໝຸນວຽນອື່ນໆ

	31 ທັນວາ 2021	*31 ທັນວາ 2020*
	ກີບ	*ກີບ*
ເງິນລ່ວງໜ້າໃຫ້ພະນັກງານ	18,000,000	190,460,000
	18,000,000	**190,460,000**

8. ເຄື່ອງໃນສາງ

	31 ທັນວາ 2021	*31 ທັນວາ 2020*
	ກີບ	*ກີບ*
ວັດຖຸດິບ ແລະ ວັດຖຸສິ້ນເປືອງ	4,660,106,097	5,051,423,187
ອຸປະກອນ ແລະ ເຄື່ອງມື	10,554,283,208	10,568,836,246
ສິນຄ້າພວມຜະລິດ	10,117,771,841	10,117,771,841
ສິນຄ້າສຳເລັດຮູບ	773,052,368	773,052,368
ເງິນແຮສຳລັບເຄື່ອງໃນສາງ	(5,303,533,771)	(920,895,089)
	20,801,679,743	**25,590,188,553**

9. ໜີ້ຕ້ອງຮັບອື່ນໆ

	31 ທັນວາ 2021	*31 ທັນວາ 2020*
	ກີບ	*ກີບ*
ເງິນມັດຈຳໃຫ້ລູກຄ້າ	-	113,896,000
ອື່ນໆ	38,921,847	8,051,501
	38,921,847	**121,947,501**

10. ໜີ້ຕ້ອງຮັບການຄ້າ

	31 ທັນວາ 2021	*31 ທັນວາ 2020*
	ກີບ	*ກີບ*
ໜີ້ຕ້ອງຮັບການຄ້າ	17,557,693,752	31,521,508,321
ເງິນແຮສຳລັບໜີ້ຕ້ອງຮັບທວງຍາກ	(5,318,198,309)	(1,912,046,892)
	12,239,495,443	**29,609,461,429**

ລາຍລະອຽດຂອງ ເງິນແຮສຳລັບໜີ້ຕ້ອງຮັບທວງຍາກ ນະວັນທີ 31 ທັນວາ 2021 ມີດັ່ງນີ້:

ສະຖານະເກີນກຳນົດ	*ຍອດເຫຼືອໜີ້ຕ້ອງຮັບ*	*ເງິນແຮ*
ຄົບກຳນົດຊຳລະ 6 ເດືອນ ຫາ 1 ປີ	-	-
ຄົບກຳນົດຊຳລະ ຈາກ 1 ປີ ຫາ 2 ປີ	4,313,187,783	2,156,593,892
ຄົບກຳນົດຊຳລະຫຼາຍກວ່າ 2 ປີ	3,161,604,417	3,161,604,417
ລວມ	**7,474,792,200**	**5,318,198,309**

ລາຍລະອຽດຂອງເງິນແຮສຳລັບໜີ້ຕ້ອງຮັບທວງຍາກ ນະວັນທີ 31 ທັນວາ 2020 ມີດັ່ງນີ້:

ສະຖານະເກີນກຳນົດ	*ຍອດເຫຼືອໜີ້ຕ້ອງຮັບ*	*ເງິນແຮ*
ຄົບກຳນົດຊຳລະ 6 ເດືອນ ຫາ 1 ປີ	222,783,800	66,835,140
ຄົບກຳນົດຊຳລະ ຈາກ 1 ປີ ຫາ 2 ປີ	797,030,671	398,515,335
ຄົບກຳນົດຊຳລະຫຼາຍກວ່າ 2 ປີ	1,446,696,417	1,446,696,417
ລວມ	**2,466,510,888**	**1,912,046,892**

11. ເງິນສົດ

	31 ທັນວາ 2021	*31 ທັນວາ 2020*
	ກີບ	*ກີບ*
ເງິນສົດໃນຄັງ	13,891,418	83,946,385
ເງິນຝາກທະນາຄານ	337,901,373	3,332,149,328
	351,792,791	**3,416,095,713**

12. ເງິນກູ້ຍືມ

ລາຍລະອຽດຂອງ ເງິນກູ້ຍືມໄລຍະສັ້ນຈາກທະນາຄານ ນະວັນທີ 31 ທັນວາ 2021 ມີດັ່ງນີ້:

ທະນາຄານ	*ມື້ຄົບກຳນົດ*	*ອັດຕາ ດອກເບ້ຍ ຕໍ່ປີ*	*ການຊຳລະ ດອກເບ້ຍ*	*ຫຼັກຊັບຄ້ຳ ປະກັນ*	*ສະກຸນເງິນ*	ມູນຄ່າ
ທະນາຄານ ລາວຈີນ ຈຳກັດ	21 ຕຸລາ 2022	10%	ລາຍເດືອນ	[*]	ກີບ	2,000,000,000
ລວມ						**2,000,000,000**

[*] ຫຼັກຊັບຄ້ຳປະກັນປະກອບມີ ທີ່ດິນ, ຕຶກອາຄານ, ສາງ, ໂຮງງານ ແລະ ຊັບສິນອື່ນໆ ຂອງບໍລິສັດຢູ່ເມືອງວັງວຽງ ແລະ ແຂວງ ວຽງຈັນ.

13. ພັນທະອາກອນ

	31 ທັນວາ 2021	*31 ທັນວາ 2020*
	ກີບ	*ກີບ*
ອາກອນຕ້ອງສົ່ງຈາກຜູ້ສະໜອງຕ່າງປະເທດ	2,999,996,916	2,916,991,480
ອາກອນມູນຄ່າເພີ່ມສົ້ນອອກ	233,628,774	270,836,732
ໜີ້ຕ້ອງສົ່ງອາກອນກຳໄລ (ບົດອະທິບາຍເລກທີ 24)	479,656,526	479,656,526
ອາກອນອື່ນໆ	1,497,555,010	1,503,214,166
	5,210,837,226	**5,170,698,904**

14. ໜີ້ຕ້ອງສິ່ງອື່ນໆ

	31 ທັນວາ 2021	*31 ທັນວາ 2020*
	ກີບ	*ກີບ*
ໜີ້ຕ້ອງສິ່ງເງິນປັນຜົນໃຫ້ພາກສ່ວນກ່ຽວຂ້ອງ (ບົດອະທິບາຍເລກທີ 25) (*)	13,581,363,960	13,581,363,960
ອື່ນໆ	739,357,749	64,528,590
	14,320,721,709	**13,645,892,550**

(*) ລາຍລະອຽດຂອງການຈ່າຍເງິນປັນຜົນມີດັ່ງນີ້:

	31 ທັນວາ 2021	*31 ທັນວາ 2020*
	ກີບ	*ກີບ*
ໜີ້ຕ້ອງສິ່ງເງິນປັນຜົນປະຈຳປີ 2016	3,395,146,565	3,395,146,565
ໜີ້ຕ້ອງສິ່ງເງິນປັນຜົນປະຈຳປີ 2015	5,773,056,205	5,773,056,205
ໜີ້ຕ້ອງສິ່ງເງິນປັນຜົນປະຈຳປີ 2014	4,413,161,190	4,413,161,190
	13,581,363,960	**13,581,363,960**

15. ທຶນຈົດທະບຽນຕາມກົດໝາຍທີ່ຖອກແລ້ວ

15.1 ຮຸ້ນ

	31 ທັນວາ 2021		*31 ທັນວາ 2020*	
	ຈຳນວນ (ຮຸ້ນ)	*ມູນຄ່າ (ກີບ)*	*ຈຳນວນ (ຮຸ້ນ)*	*ມູນຄ່າ (ກີບ)*
ຮຸ້ນທີ່ໄດ້ຮັບອະນຸຍາດ				
ຮຸ້ນທີ່ອອກ ແລະ ຖອກແລ້ວ				
ຮຸ້ນສາມັນ	40,004,000	20,002,000,000	40,004,000	20,002,000,000

ວັນທີ 14 ກຸມພາ 2018, ບໍລິສັດໄດ້ຮັບໜັງສືຢັ້ງຢືນຜົນສຳເລັດການອອກຈຳໜ່າຍຮຸ້ນໃຫ້ແກ່ມວນຊົນຄັ້ງທຳອິດ (IPO) ເລກທີ 0008/ສຄຄຊ ອອກໃຫ້ໂດຍສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບລາວ, ເນື່ອງຈາກວ່າບໍລິສັດໄດ້ສຳເລັດຂັ້ນຕອນ IPO ເຊິ່ງຮຸ້ນຈຳນວນ 12,001,200 ຮຸ້ນ ລາຄາໜ້າບັດ 500 ກີບ/ຮຸ້ນ ແລະ ລາຄາຂາຍຮຸ້ນມູນຄ່າ 2,400 ກີບ/ຮຸ້ນ ໄດ້ຖືກຂາຍອອກ.

ຮຸ້ນທັງໝົດ 40,004,000 ຮຸ້ນຂອງບໍລິສັດ (ພາຍໃຕ້ການເປັນເຈົ້າຂອງ ຂອງ "ຊີມັງລາວ") ຖືກຈົດທະບຽນຢ່າງເປັນທາງການໃນຕະຫຼາດຫຼັກຊັບ ນະວັນທີ 2 ມີນາ 2018. ມູນຄ່າໜ້າບັດຂອງແຕ່ລະຮຸ້ນແມ່ນ 500 ກີບ.

ໂຄງຮ່າງການຖືຮຸ້ນຂອງບໍລິສັດ ນະວັນທີ 31 ທັນວາ 2021 ມີດັ່ງນີ້:

ຜູ້ຖືຮຸ້ນ	*ຈຳນວນຮຸ້ນ*	*ເປີເ�ซັນ*
ບໍລິສັດຮ່ວມມືສາກົນດ້ານເສດຖະກິດ-ເຕັກນິກ ຢຸນນານ ສປ ຈີນ (CYC)	14,277,428	35.69%
ລັດວິສາຫະກິດ ພັດທະນາກະສິກຳ-ອຸດສາຫະກຳ ແລະ ບໍລິການ ຂາອອກ-ຂາເຂົ້າ (DAI)	13,717,372	34.29%
ບໍລິສັດຫຼັກຊັບລາວ - ຈີນ (LCS)	7,544,754	18.86%
ບໍລິສັດ ມະຫາຊົນ ແລະ ນັກລົງທຶນ ອື່ນໆ	4,464,446	11.16%
	40,004,000	

16. ລາຍຮັບຈາກການຂາຍສິນຄ້າ

	2021	*2020*
	ກີບ	*ກີບ*
ຂາຍຊີມັງເປົ່າ	-	8,142,692,226
ຂາຍຊີມັງຜົງ	-	18,199,937,740
	-	**26,342,629,966**

17. ຕົ້ນທຶນຈາກການຂາຍ

	2021 ກີບ	2020 ປັບປຸງໃໝ່ ກີບ
ຂາຍຊີມັງເປົ່າ	-	18,601,414,307
ຂາຍຊີມັງກອງ	-	31,499,233,981
	-	**50,100,648,288**

18. ລາຍຮັບຈາກການດຳເນີນງານອື່ນໆ

	2021 ກີບ	2020 ກີບ
ຂາຍເຫຼັກເສດ	146,807,115	8,253,209
ລາຍຮັບຄ່ານາຍໜ້າ	-	343,353,569
ອື່ນໆ	750,000	3,500,000
	147,557,115	**355,106,778**

19. ລາຍຈ່າຍການດຳເນີນງານອື່ນໆ

	2021 LAK	2020 LAK
ຄ່າຫຼຸ້ຍຫ້ຽນຂອງໂຮງງານທີ່ຍຸດຊົ່ວຄາວ	6,041,190,590	-
ເງິນແຮສຳລັບຄ່າເສື່ອມມູນຄ່າເຄື່ອງໃນສາງ	4,382,638,682	-
ລາຍຈ່າຍໃຫ້ພະນັກງານ	808,242,389	-
ສາທາລະນຸປະໂພກ ແລະ ນ້ຳມັນ	182,113,576	-
ອື່ນໆ	1,173,415,459	-
	12,587,600,696	**-**

20. ຕົ້ນທຶນຈາກການຂາຍ ແລະ ຈັດຈຳໜ່າຍ

	2021 ກີບ	2020 ກີບ
ຕົ້ນທຶນຄ່າຂົນສົ່ງ	-	316,104,994
ໂບນັດຈາກການຂາຍ	-	-
ລາຍຈ່າຍໃຫ້ພະນັກງານ	-	761,508,144
ລາຍຈ່າຍຄ່າຫຼຸ້ຍຫ້ຽນ	-	125,322,312
ຕົ້ນທຶນຈາກການຂາຍ ແລະ ຈັດຈຳໜ່າຍອື່ນໆ	-	349,572,260
	-	**1,552,507,710**

21. ລາຍຈ່າຍໃນການບໍລິຫານ

	2021	*2020*
	ກີບ	*ກີບ*
ລາຍຈ່າຍໃຫ້ພະນັກງານ	2,717,065,743	4,536,462,434
ລາຍຈ່າຍທາງວິຊາການ	728,353,796	1,172,413,142
ລາຍຈ່າຍຄ່າຫຼຸ້ຍຫ້ຽນ	162,540,220	174,347,880
ລາຍຈ່າຍຄ່າສາທາລະນຸປະโภก ແລະ ນ້ຳມັນ	109,364,152	154,860,667
ລາຍຈ່າຍຄ່າເຊົ່າ	15,156,438	165,258,170
ລາຍຈ່າຍຄ່າບຳລຸງຮັກສາ	47,040,000	68,454,855
ລາຍຈ່າຍຄ່າການພິມ ແລະ ເຜີຍແຜ່	14,908,148	66,836,500
ລາຍຈ່າຍຄ່າເດີນທາງ	45,031,000	55,375,930
ຄ່າບຳເນັດ ແລະ ລາຍຈ່າຍອື່ນໆຂອງພະນັກງານ	-	866,566,896
ຊຳລະສະສາງລາຍຈ່າຍລ່ວງໜ້າໃຫ້ແກ່ຜູ້ສະໜອງ	-	1,115,350,919
ລາຍຈ່າຍໃນການບໍລິຫານອື່ນໆ	1,016,853,265	1,177,956,592
	4,856,312,762	**9,553,883,985**

22. ລາຍຮັບທາງການເງິນ

	2021	*2020*
	ກີບ	*ກີບ*
ລາຍຮັບດອກເບ້ຍ	1,005,650	10,372,529
	1,005,650	**10,372,529**

23. ຕົ້ນທຶນທາງການເງິນ

	2021	*2020*
	ກີບ	*ກີບ*
ລາຍຈ່າຍດອກເບ້ຍ	323,888,888	921,111,103
ຂາດທຶນຈາກອັດຕາແລກປ່ຽນ	567,314,666	69,075,908
	891,203,544	**990,187,011**

24. ອາກອນກຳໄລ

ອີງຕາມໃບຢັ້ງຢືນການລົງທຶນ ສະບັບປັບປຸງ ວັນທີ 17 ພະຈິກ 1998, ບໍລິສັດແມ່ນຈະຖືກຍົກເວັ້ນອາກອນກຳໄລ ສຳລັບ ສີ່ປີເລີ່ມຈາກປີທຳອິດທີ່ໄດ້ຮັບກຳໄລ ແລະ ຈະຫຼຸດລົງ 50% ຂອງອາກອນກຳໄລທີ່ປະກາດໃຊ້ສຳລັບສອງປີຖັດໄປ. ບໍລິສັດມີພັນທະໃນການຈ່າຍອາກອນກຳໄລ (ອກລ)ໃນອັດຕາ 20% ຫຼັງຈາກໄລຍະເວລາຂໍອະນຸຍາດຫຼຸດອາກອນ. ຜົນກຳໄລປີທຳອິດ ແມ່ນທ້າຍປີການບັນຊີ ນະວັນທີ 31 ທັນວາ 2005.

ບໍລິສັດໄດ້ຈົດທະບຽນກັບຕະຫຼາດຫຼັກຊັບລາວນັບແຕ່ 2 ມີນາ 2018. ອີງຕາມໜັງສືແຈ້ງການເລກທີ 2618/ກສອ ລົງວັນທີ 4 ມິຖຸນາ 2018 ຈາກກະຊວງ ການເງິນ, ບໍລິສັດ ໄດ້ຮັບອະນຸຍາດໃຫ້ຫຼຸດອາກອນກຳໄລ 5% ຈາກອັດຕາອາກອນປົກກະຕິສຳລັບ ຫ້າ ປີທຳອິດຈາກປີ 2018 ຫາ 2021. ຫຼັງຈາກນັ້ນ, ບໍລິສັດມີພັນທະໃນການຈ່າຍອາກອນກຳໄລໃນອັດຕາປົກກະຕິທີ່ນຳໃຊ້. ອີງຕາມກົດໝາຍວ່າດ້ວຍອາກອນກຳໄລ ເລກທີ 67/ສພຊ ນະວັນທີ 18 ມິຖຸນາ 2019 (ໃຊ້ແທນກົດໝາຍວ່າດ້ວຍອາກອນກຳໄລ ເລກທີ 70/ສພຊ) ເຊິ່ງມີຜົນບັງຄັບໃຊ້ສຳລັບໄລຍະຈາກວັນທີ 1 ມັງກອນ 2020, ອາກອນກຳໄລ ໃນອັດຕາ 13% ແມ່ນຖືກນຳໃຊ້ກັບບໍລິສັດ ທີ່ຈົດທະບຽນໃນຕະຫຼາດຫຼັກຊັບ ສຳລັບໄລຍະສີ່ປີນັບແຕ່ວັນທີ່ຈົດທະບຽນ ແລະ ອັດຕາ 20% ສຳລັບປີຕໍ່ໄປ. ດັ່ງນັ້ນ, ລາຍໄດ້ຂອງອາກອນກຳໄລຂອງບໍລິສັດ ສຳລັບປີ 2021 ແມ່ນຈະຖືກນຳໃຊ້ໃນອັດຕາ 13%.

ການມອບອາກອນຂອງບໍລິສັດ ແມ່ນຈະຖືກກວດສອບໂດຍເຈົ້າໜ້າທີ່ສ່ວຍສາອາກອນ. ການນຳໃຊ້ກົດໝາຍວ່າດ້ວຍສ່ວຍສາອາກອນ ແລະ ກົດລະບຽບຕ່າງໆມີການຕີຄວາມໝາຍທີ່ແຕກຕ່າງກັນ, ມູນຄ່າທີ່ລາຍງານໃນເອກະສານລາຍງານການເງິນອາດຈະປ່ຽນແປງພາຍຫຼັງເອກະສານລາຍງານການເງິນຖືກກວດກາໂດຍເຈົ້າໜ້າທີ່ສ່ວຍສາອາກອນ.

ໜີ້ຕ້ອງສົ່ງອາກອນພາຍໃນປີແມ່ນອີງຕາມອາກອນກຳໄລຕ້ອງຈ່າຍໃນປີ. ໜີ້ສິນອາກອນພາຍໃນປີຂອງບໍລິສັດຖືກຄິດໄລ່ໂດຍການນຳໃຊ້ອັດຕາອາກອນທີ່ໄດ້ຖືກປະກາດໃຊ້ໃນມື້ອອກໃບລາຍງານຖານະການເງິນ.

ການຄາດຄະເນ ອາກອນກຳໄລກ່ອນຖືກສະແດງຢູ່ຂ້າງລຸ່ມນີ້:

ສະກຸນເງິນ: ກີບ

	2021	*2020*
ຂາດທຶນກ່ອນຫັກອາກອນ	**(21,592,705,664)**	**(35,997,391,275)**
ດັດແກ້ເພື່ອຫຼຸດກຳໄລກ່ອນຫັກອາກອນ:		
ເງິນແຮສຳລັບຄ່າເສື່ອມມູນຄ່າເຄື່ອງໃນສາງ	4,382,638,682	350,743,333
ເງິນແຮໜີ້ທວງຍາກ	3,406,151,417	508,273,554
ລາຍຈ່າຍອື່ນໆທີ່ບໍ່ອະນຸຍາດໃຫ້ຫັກ	1,419,463,952	526,598,028
ຄາດຄະເນອາກອນກຳໄລຕ້ອງມອບໃນປີ	**(12,384,451,613)**	**(34,611,776,360)**
ຄາດຄະເນລ່າຍຈ່າຍອາກອນກຳໄລພາຍໃນປີໃນອັດຕາ 13 % (2020: 15%)	-	-
ອາກອນກຳໄລຕ້ອງຈ່າຍຕົ້ນປີ	479,656,526	479,656,526
ອາກອນກຳໄລທີ່ໄດ້ຈ່າຍໃນປີ	-	-
ອາກອນກຳໄລຕ້ອງຈ່າຍທ້າຍປີ (ບົດອະທິບາຍເລກທີ 13)	**479,656,526**	**479,656,526**

24. ອາກອນກຳໄລ (ຕໍ່)

ຂາດທຶນທາງອາກອນຍົກໄປຫັກຕໍ່

ບໍລິສັດມີສິດທີ່ຈະຍົກຍອດຂາດທຶນທາງອາກອນໄປຫັກລົບກັບລາຍໄດ້ທາງອາກອນພາຍໃນສາມປີຫຼັງຈາກປີທີ່ຂາດທຶນ. ນະວັນທີໃບລາຍງານຖານະການເງິນ, ບໍລິສັດ ມີຂາດທຶນທາງອາກອນສະສົມທີ່ສາມາດຫັກຕໍ່ກັບລາຍໄດ້ທາງອາກອນໃນອະນາຄົດ. ລາຍລະອຽດດັ່ງລຸ່ມນີ້:

ສະກຸນເງິນ: ກີບ

ປີທີເລີ່ມຕົ້ນ	*ສາມາດນຳໃຊ້ ຮອດປີ*	*ມູນຄ່າຂາດທຶນທາງ ອາກອນ*	*ນຳໃຊ້ຮອດ ວັນທີ 31 ທັນວາ 2021*	*ປັບໄໝ*	*ບໍ່ທັນນຳໃຊ້ນະວັນທີ 31 ທັນວາ 2021*
2019	2024	22,074,986,857	-	-	22,074,986,857
2020	2025	34,611,776,360	-	-	34,611,776,360
2021	2026	12,384,451,613	-	-	12,384,451,613
ລວມ		**69,071,214,830**	**-**	**-**	**69,071,214,830**

ຂາດທຶນທາງອາກອນຕາມການເປີດເຜີຍອາກອນກຳໄລຂອງບໍລິສັດ ສຳລັບປີ 2019, 2020 ແລະ 2021 ແມ່ນຍັງບໍ່ທັນໄດ້ຮັບການກວດສອບຈາກເຈົ້າໜ້າທີ່ສ່ວຍສາອາກອນທ້ອງຖິ່ນ ນະວັນທີຂອງເອກະສານລາຍງານການເງິນ.

25. ລາຍການເຄື່ອນໄຫວກັບພາກສ່ວນທີ່ກ່ຽວຂ້ອງ

ລາຍການເຄື່ອນໄຫວກັບພາກສ່ວນທີ່ກ່ຽວຂ້ອງ ແມ່ນການປະຕິບັດທາງສັນຍາຕາມລາຄາທີ່ໄດ້ຕົກລົງກັນໄວ້. ລາຍການເຄື່ອນໄຫວທີ່ສຳຄັນກັບພາກສ່ວນທີ່ກ່ຽວຂ້ອງມີດັ່ງລຸ່ມນີ້:

ພາກສ່ວນທີ່ກ່ຽວຂ້ອງ	*ສາຍພົວພັນ*	*ລາຍການເຄື່ອນໄຫວ*	*2021*	*2020*
			ກີບ	*ກີບ*
ບໍລິສັດຮ່ວມມືສາກົນດ້ານ ເສດຖະກິດ-ເຕັກນິກ ຢຸນ ນານ ສປ ຈີນ (CYC)	ຜູ້ຖືຮຸ້ນ	ຈັດຊື້ວັດຖຸດິບ	-	479,179,910
		ລາຍຈ່າຍໃນນາມຂອງ ພາກສ່ວນກ່ຽວຂ້ອງ	111,709,960	-
		ລາຍຈ່າຍຊື້ວັດຖຸດິບ	-	262,672,974
ລັດວິສາຫະກິດ ພັດທະນາ ກະສິກຳ-ອຸດສາຫະກຳ ແລະ ບໍລິການຂາອອກ-ຂາ ເຂົ້າ (DAI)	ຜູ້ຖືຮຸ້ນ	ຈັດຊື້ວັດຖຸດິບ	-	858,276,674
		ລາຍຈ່າຍຈັດຊື້ວັດຖຸ ດິບ	256,666,240	1,213,600,710

25. ລາຍການເຄື່ອນໄຫວກັບພາກສ່ວນທີ່ກ່ຽວຂ້ອງ (ຕໍ່)

ຍອດເຫຼືອໜີ້ຕ້ອງຮັບຈາກພາກສ່ວນທີ່ກ່ຽວຂ້ອງ ນະວັນທີ 31 ທັນວາ 2021 ແລະ ວັນທີ 31 ທັນວາ 2020 ດັ່ງລຸ່ມນີ້:

ພາກສ່ວນທີ່ກ່ຽວຂ້ອງ	*ສາຍພົວພັນ*	*ລາຍການເຄື່ອນໄຫວ*	*31 ທັນວາ 2021* ກີບ	*31 ທັນວາ 2020* ກີບ
ມູນຄ່າໜີ້ຕ້ອງສົ່ງໃຫ້ພາກສ່ວນທີ່ກ່ຽວຂ້ອງ				
ບໍລິສັດຮ່ວມມືສາກົນດ້ານເສດຖະກິດ-ເຕັກນິກ ຢຸນນານ ສປ ຈີນ (CYC)	ຜູ້ຖືຮຸ້ນ	ຈັດຊື້ວັດຖຸດິບ	738,922,588	611,050,641
ລັດວິສາຫະກິດ ພັດທະນາກະສິກຳ-ອຸດສາຫະກຳ ແລະ ບໍລິການຂາອອກ-ຂາເຂົ້າ (DAI)	ຜູ້ຖືຮຸ້ນ	ຈັດຊື້ວັດຖຸດິບ	4,989,651,549	5,222,984,510
			5,728,574,137	**5,834,035,151**
ໜີ້ຕ້ອງສົ່ງອື່ນໆ (ບົດອະທິບາຍເລກທີ 15)				
ບໍລິສັດຮ່ວມມືສາກົນດ້ານເສດຖະກິດ-ເຕັກນິກ ຢຸນນານ ສປ ຈີນ (CYC)	ຜູ້ຖືຮຸ້ນ	ໜີ້ຕ້ອງສົ່ງເງິນປັນຜົນ	7,736,383,104	7,736,383,104
ລັດວິສາຫະກິດ ພັດທະນາກະສິກຳ-ອຸດສາຫະກຳ ແລະ ບໍລິການຂາອອກ-ຂາເຂົ້າ (DAI)	ຜູ້ຖືຮຸ້ນ	ໜີ້ຕ້ອງສົ່ງເງິນປັນຜົນ	5,844,980,856	5,844,980,856
			13,581,363,960	**13,581,363,960**

ລາຍການເຄື່ອນໄຫວອື່ນໆຂອງພາກສ່ວນທີ່ກ່ຽວຂ້ອງ

ຄ່າຕອບແທນໃຫ້ຄະນະອຳນວຍການພາຍໃນປີມີດັ່ງລຸ່ມນີ້:

	2021 ກີບ	*2020* ກີບ
ເງິນເດືອນ ແລະ ໂບນັດ	444,096,336	720,428,086
	444,096,336	**720,428,086**

26. ລາຍການດັດແກ້ຄືນຕົວເລກ

ຕົວເລກບາງສ່ວນນະວັນທີ 31 ທັນວາ 2020 ໄດ້ຮັບການປັບປຸງໃໝ່ເພື່ອແກ້ໄຂຂໍ້ຜິດພາດຂອງປີກ່ອນ ທີ່ກ່ຽວຂ້ອງກັບການບໍ່ຮັບຮູ້ຄ່າຕອບແທນຂອງໜີ້ສິນສຳລັບພະນັກງານພາຍຫຼັງການຍົກເລີກສັນຍາຈ້າງງານຈຳນວນ 11.4 ພັນລ້ານກີບທີ່ເກີດຂຶ້ນພາຍໃນປີສິ້ນສຸດວັນທີ 31 ທັນວາ 2020. ລາຍລະອຽດດັ່ງຕໍ່ໄປນີ້:

ສະກຸນເງິນ: ກີບ

	31 ທັນວາ 2020 (ນຳສະເໜີກ່ອນໜ້ານີ້)	*ການປັບປຸງໃໝ່*	*31 ທັນວາ 2020 (ປັບປຸງໃໝ່)*
ໃບລາຍງານຖານະທາງການເງິນ ນະວັນທີ 31 ທັນວາ 2020			
ໜີ້ຕ້ອງສິ່ງໃຫ້ພະນັກງານ	266,070,774	11,416,337,531	11,682,408,305
ຂາດທຶນສະສົມ	(20,405,068,192)	(11,416,337,531)	(31,821,405,723)

	2020 (ນຳສະເໜີກ່ອນໜ້ານີ້)	*ການປັບປຸງໃໝ່*	*2020 (ປັບປຸງໃໝ່)*
ໃບລາຍງານຜົນໄດ້ຮັບສຳລັບປີສິ້ນສຸດ 31 ທັນວາ 2020			
ຕົ້ນທຶນຈາກການຂາຍ	(42,047,783,234)	(8,052,865,054)	(50,100,648,288)
ລາຍຈ່າຍໃນການບໍລິການ	(6,190,411,508)	(3,363,472,477)	(9,553,883,985)
ຂາດທຶນກ່ອນອາກອນ	(24,581,053,744)	(11,416,337,531)	(35,997,391,275)

	2020 (ນຳສະເໜີກ່ອນໜ້ານີ້)	*ການປັບປຸງໃໝ່*	*2020 (ປັບປຸງໃໝ່)*
ໃບລາຍງານກະແສເງິນສົດສຳລັບປີສິ້ນສຸດ 31 ທັນວາ 2020			
ຂາດທຶນກ່ອນອາກອນ	(24,581,053,744)	(11,416,337,531)	(35,997,391,275)
(ຫຼຸດລົງ)/ເພີ່ມຂຶ້ນໃນການຄ້າ ແລະ ໜີ້ຕ້ອງສິ່ງອື່ນໆ, ປະກອບມີ ຈຳນວນທີ່ຂຶ້ນກັບພາກສ່ວນທີ່ກ່ຽວຂ້ອງ	(19,355,920,207)	11,416,337,531	(7,939,582,676)

27. ເຫດການພາຍຫຼັງວັນທີຂອງໃບລາຍງານຖານະການເງິນ

ບໍ່ໄດ້ມີເຫດການໃດທີ່ສຳຄັນເກີດຂຶ້ນຫຼັງຈາກວັນທີ 31 ທັນວາ 2021 ທີ່ຮຽກຮ້ອງໃຫ້ມີການດັດແກ້ ຫຼື ເປີດເຜີຍໃນ ເອກະສານລາຍງານການເງິນ.

28. ການອະນຸມັດອອກເອກະສານລາຍງານການເງິນ

ເອກະສານລາຍງານການເງິນນະວັນທີ ແລະ ສຳລັບປີທີສິ້ນສຸດ ວັນທີ 31 ທັນວາ 2021 ແມ່ນໄດ້ຖືກອະນຸມັດໂດຍຄະນະ ອຳນວຍການຂອງບໍລິສັດ ໃນວັນທີ 14 ເມສາ 2022 .

ບໍລິສັດ ຊີມັງລາວ ມະຫາຊົນ Lao Cement Public Company

ທ່ານ ຈ່າງ ລີ້	ທ່ານ ວິໄຊ ດວງສະຫວັດ
ຜູ້ອຳນວຍການໃຫຍ່	ຮອງຫົວໜ້າບັນຊີ ແລະ ການເງິນ

ນະຄອນຫຼວງວຽງຈັນ, ສປປ ລາວ

14 ເມສາ 2022